# ສາລະບານ


**ພາກທີ I ບົດບັນຍັດທົ່ວໄປ ....................................................................1**

ມາດຕາ 1 ຈຸດປະສົງ.................................................................................... 1
ມາດຕາ 2 ການຄ້າທາງເອເລັກໂຕຣນິກ................................................................ 1
ມາດຕາ 3 ການອະທິບາຍຄຳສັບ....................................................................... 1
ມາດຕາ 4 ນະໂຍບາຍ ຂອງລັດກ່ຽວກັບການຄ້າທາງເອເລັກໂຕຣນິກ ..................................... 2
ມາດຕາ 5 ຫຼັກການກ່ຽວກັບວຽກງານການຄ້າທາງເອເລັກໂຕຣນິກ ........................................ 2
ມາດຕາ 6 ຂອບເຂດການນຳໃຊ້......................................................................... 2
ມາດຕາ 7 ການຮ່ວມມືສາກົນ.......................................................................... 3

**ພາກທີ II ການດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ...............................3**

ມາດຕາ 8 ການດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ............................................. 3
ມາດຕາ 9 ການຄ້າຜ່ານຊ່ອງທາງເອເລັກໂຕຣນິກຂອງຕົນ ................................................ 3
ມາດຕາ 10 ການໃຫ້ບໍລິການຕະຫຼາດ ທາງເອເລັກໂຕຣນິກ ............................................... 3
ມາດຕາ 11 ການຄ້າໃນຕະຫຼາດ ທາງເອເລັກໂຕຣນິກ...................................................... 3

**ພາກທີ III ການແຈ້ງ ຫຼື ການຂໍອະນຸຍາດດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ..3**

ມາດຕາ 12 ການແຈ້ງ ຫຼື ການອະນຸຍາດດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ.................. 3
**ໝວດທີ 1 ການແຈ້ງ ແລະ ການຢັ້ງຢືນ** ............................................................... 3
ມາດຕາ 13 ການແຈ້ງດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ...................................... 3
ມາດຕາ 14 ເງື່ອນໄຂຂອງການແຈ້ງ .................................................................... 4
ມາດຕາ 15 ເອກະສານປະກອບການແຈ້ງ ................................................................ 4
ມາດຕາ 16 ການຢັ້ງຢືນການແຈ້ງດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ .......................... 4
ມາດຕາ 17 ການນຳໃຊ້ ແລະ ອາຍຸການນຳໃຊ້ ໃບຢັ້ງຢືນການແຈ້ງ....................................... 4
**ໝວດທີ 2 ການຂໍອະນຸຍາດດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ**.............................. 5
ມາດຕາ 18 ການຂໍອະນຸຍາດດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ.............................. 5
ມາດຕາ 19 ເງື່ອນໄຂຂອງການຂໍອະນຸຍາດ............................................................... 5
ມາດຕາ 20 ເອກະສານປະກອບການຂໍອະນຸຍາດ.......................................................... 5
ມາດຕາ 21 ທຶນຈົດທະບຽນສຳລັບນັກລົງທຶນຕ່າງປະເທດ................................................ 5
ມາດຕາ 22 ການພິຈາລະນາ............................................................................ 6
ມາດຕາ 23 ການນຳໃຊ້ ແລະ ອາຍຸການນຳໃຊ້........................................................... 6

**ພາກທີ IV ສັນຍາການຄ້າທາງເອເລັກໂຕຣນິກ .........................................6**

**ໝວດທີ 1 ສັນຍາການຄ້າທາງເອເລັກໂຕຣນິກ** ........................................................ 6
ມາດຕາ 24 ສັນຍາການຄ້າທາງເອເລັກໂຕຣນິກ ......................................................... 6
ມາດຕາ 25 ການສະເໜີສ້າງສັນຍາການຄ້າທາງເອເລັກໂຕຣນິກ.......................................... 7
ມາດຕາ 26 ການຕອບຮັບ ຫຼື ການປະຕິເສດ ການສະເໜີສ້າງສັນຍາການຄ້າທາງເອເລັກໂຕຣນິກ ...... 7
ມາດຕາ 27 ການສິ້ນສຸດການສະເໜີສ້າງສັນຍາການຄ້າທາງເອເລັກໂຕຣນິກ............................ 7
ມາດຕາ 28 ການມີຜົນສັກສິດຂອງສັນຍາການຄ້າທາງເອເລັກໂຕຣນິກ................................... 7
ມາດຕາ 29 ການປ່ຽນແປງສັນຍາການຄ້າທາງເອເລັກໂຕຣນິກ........................................... 7

ມາດຕາ 30 ການສິ້ນສຸດສັນຍາການຄ້າທາງເອເລັກໂຕຣນິກ....... 7
ມາດຕາ 31 ການລະເມີດສັນຍາການຄ້າທາງເອເລັກໂຕຣນິກ....... 8
**ໝວດທີ 2 ສັນຍາການຄ້າທາງເອເລັກໂຕຣນິກຜ່ານລະບົບຄຳສັ່ງຊື້....... 8**
ມາດຕາ 32 ສັນຍາການຄ້າທາງເອເລັກໂຕຣນິກຜ່ານລະບົບຄຳສັ່ງຊື້....... 8
ມາດຕາ 33 ເນື້ອໃນຂອງສັນຍາການຄ້າທາງເອເລັກໂຕຣຜ່ານລະບົບຄຳສັ່ງຊື້....... 8
ມາດຕາ 34 ການທົບທວນ ແລະ ຢືນຢັນເນື້ອໃນຂອງສັນຍາການຄ້າທາງເອເລັກໂຕຣນິກຜ່ານລະບົບຄຳສັ່ງຊື້....... 8
ມາດຕາ 35 ການຍົກເລີກສັນຍາການຄ້າທາງເອເລັກໂຕຣນິກຜ່ານລະບົບຄຳສັ່ງຊື້....... 8
**ໝວດທີ 3 ສັນຍາການຄ້າທາງເອເລັກໂຕຣນິກຜ່ານສື່ສັງຄົມອອນລາຍ....... 9**
ມາດຕາ 36 ສັນຍາການຄ້າທາງເອເລັກໂຕຣນິກຜ່ານສື່ສັງຄົມອອນລາຍ....... 9
ມາດຕາ 37 ເນື້ອໃນຂອງສັນຍາການຄ້າທາງເອເລັກໂຕຣນິກຜ່ານສື່ສັງຄົມອອນລາຍ....... 9
**ພາກທີ V ການສະໜອງ ແລະ ການປົກປ້ອງຂໍ້ມູນ ໃນຊ່ອງທາງການຄ້າທາງເອ....... 9**
ມາດຕາ 38 ການສະໜອງຂໍ້ມູນ....... 9
ມາດຕາ 39 ເນື້ອໃນການສະໜອງຂໍ້ມູນ....... 10
ມາດຕາ 40 ການປົກປ້ອງຂໍ້ມູນ....... 10
**ພາກທີ VI ສະມາຄົມທຸລະກິດການຄ້າທາງເອເລັກໂຕຣນິກ....... 11**
ມາດຕາ 41 ສະມາຄົມທຸລະກິດການຄ້າທາງເອເລັກໂຕຣນິກ....... 11
ມາດຕາ 42 ສິດ ແລະ ໜ້າທີ່ ຂອງສະມາຄົມທຸລະກິດການຄ້າທາງເອເລັກໂຕຣນິກ....... 11
**ພາກທີ VII ສິດ ແລະ ພັນທະ ຂອງຜູ້ດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ....... 11**
**ໝວດທີ 1 ສິດ ແລະ ພັນທະ ຂອງຜູ້ຄ້າຜ່ານຊ່ອງທາງເອເລັກໂຕຣນິກຂອງຕົນ....... 11**
ມາດຕາ 43 ສິດ ຂອງຜູ້ຄ້າຜ່ານຊ່ອງທາງເອເລັກໂຕຣນິກຂອງຕົນ....... 11
ມາດຕາ 44 ພັນທະ ຂອງຜູ້ຄ້າຜ່ານຊ່ອງທາງເອເລັກໂຕຣນິກຂອງຕົນ....... 11
**ໝວດທີ 2 ສິດ ແລະ ພັນທະ ຂອງຜູ້ໃຫ້ບໍລິການຕະຫຼາດ ທາງເອເລັກໂຕຣນິກ....... 12**
ມາດຕາ 45 ສິດ ຂອງຜູ້ໃຫ້ບໍລິການຕະຫຼາດ ທາງເອເລັກໂຕຣນິກ....... 12
ມາດຕາ 46 ພັນທະ ຂອງຜູ້ໃຫ້ບໍລິການຕະຫຼາດ ທາງເອເລັກໂຕຣນິກ....... 12
**ໝວດທີ 3 ສິດ ແລະ ພັນທະ ຂອງຜູ້ຄ້າໃນຕະຫຼາດ ທາງເອເລັກໂຕຣນິກ....... 13**
ມາດຕາ 47 ສິດ ຂອງຜູ້ຄ້າໃນຕະຫຼາດ ທາງເອເລັກໂຕຣນິກ....... 13
ມາດຕາ 48 ພັນທະ ຂອງຜູ້ຄ້າໃນຕະຫຼາດ ທາງເອເລັກໂຕຣນິກ....... 13
**ພາກທີ VIII ຂໍ້ຫ້າມ....... 14**
ມາດຕາ 49 ຂໍ້ຫ້າມທົ່ວໄປ....... 14
ມາດຕາ 50 ຂໍ້ຫ້າມສຳລັບບຸກຄົນ ຫຼື ນິຕິບຸກຄົນ ທີ່ດຳເນີນການຄ້າທາງເອເລັກໂຕຣນິກ....... 14
ມາດຕາ 51 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ແລະ ພະນັກງານ....... 15
**ພາກທີ IX ການແກ້ໄຂຂໍ້ຂັດແຍ່ງ....... 16**
ມາດຕາ 52 ວິທີການແກ້ໄຂຂໍ້ຂັດແຍ່ງ....... 16
ມາດຕາ 53 ການແກ້ໄຂຂໍ້ຂັດແຍ່ງ ໂດຍການປະນິປະນອມ....... 16
ມາດຕາ 54 ການແກ້ໄຂຂໍ້ຂັດແຍ່ງໂດຍອີງການຄຸ້ມຄອງວຽກງານການຄ້າທາງເອເລັກໂຕຣນິກ....... 16
ມາດຕາ 55 ການແກ້ໄຂຂໍ້ຂັດແຍ່ງ ໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ....... 16

ມາດຕາ 56 ການແກ້ໄຂຂໍ້ຂັດແຍ່ງ ໂດຍສານປະຊາຊົນ ....................................................16
ມາດຕາ 57 ການແກ້ໄຂຂໍ້ຂັດແຍ່ງສາກົນ ....................................................................16

**ພາກທີ X ການຄຸ້ມຄອງ ....................................................................17**

ມາດຕາ 58 ອົງການຄຸ້ມຄອງວຽກງານການຄ້າທາງເອເລັກໂຕຣນິກ........................................17
ມາດຕາ 59 ສິດ ແລະ ໜ້າທີ່ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ....................................17
ມາດຕາ 60 ສິດ ແລະ ໜ້າທີ ຂອງ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ...........18
ມາດຕາ 61 ສິດ ແລະ ໜ້າທີ່ ຂອງ ທະນາຄານ ແຫ່ງ ສປປ ລາວ ..........................................18
ມາດຕາ 62 ສິດ ແລະ ໜ້າທີ່ ຂອງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ...............................19
ມາດຕາ 63 ສິດ ແລະ ໜ້າທີ່ ຂອງກະຊວງການເງິນ..........................................................19
ມາດຕາ 64 ສິດ ແລະ ໜ້າທີ່ ຂອງກະຊວງ, ຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ..19

**ພາກທີ XI ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ .......................20**

ມາດຕາ 65 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ............................................................20
ມາດຕາ 66 ມາດຕະການຕໍ່ຜູ້ລະເມີດ ..............................................................20
ມາດຕາ 67 ມາດຕະການ ກ່າວເຕືອນ ແລະ ສຶກສາອົບຮົມ ..........................................20
ມາດຕາ 68 ມາດຕະການທາງດ້ານວິໄນ..............................................................20
ມາດຕາ 69 ມາດຕະການປັບໃໝ ....................................................................20
ມາດຕາ 70 ມາດຕະການທາງແພ່ງ...................................................................20
ມາດຕາ 71 ມາດຕະການທາງອາຍາ ..................................................................20
ມາດຕາ 72 ມາດຕະການໂທດເພີ່ມ...................................................................20

**ພາກທີ XII ບົດບັນຍັດສຸດທ້າຍ .................................................................21**

ມາດຕາ 73 ການຈັດຕັ້ງປະຕິບັດ ....................................................................21
ມາດຕາ 74 ຜົນສັກສິດ ............................................................................21

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ ເລກທີ: ………………………/ລບ
ນະຄອນຫຼວງວຽງຈັນ, ວັນທີ: ……………………

# (ຮ່າງ)
# ດຳລັດວ່າດ້ວຍການຄ້າທາງເອເລັກໂຕຣນິກ

- ອີງຕາມກົດໝາຍວ່າດ້ວຍ ລັດຖະບານ ແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມກົດໝາຍວ່າດ້ວຍ ການປົກປ້ອງຜູ້ຊົມໃຊ້ ສະບັບເລກທີ 02/ສພຊ, ລົງວັນທີ 30 ມິຖຸນາ 2010;
- ອີງຕາມກົດໝາຍວ່າດ້ວຍ ການແຂ່ງຂັນທາງທຸລະກິດ ສະບັບເລກທີ 60/ສພຊ, ລົງວັນທີ 14 ກໍລະກົດ 2015;
- ອີງຕາມກົດໝາຍວ່າດ້ວຍ ທຸລະກຳທາງເອເລັກໂຕຣນິກ ສະບັບເລກທີ 20/ສພຊ, ລົງວັນທີ 07 ທັນວາ 2012;
- ອີງຕາມກົດໝາຍວ່າດ້ວຍ ລາຍເຊັນເອເລັກໂຕຣນິກ, ສະບັບເລກທີ 59/ສພຊ, ລົງວັນທີ 12 ທັນວາ 2018;
- ອີງຕາມໜັງສືສະເໜີຂອງ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ........ລົງວັນທີ..........

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ການຕິດຕາມ ແລະ ກວດກາວຽກງານການຄ້າທາງເອເລັກໂຕຣນິກ ຢູ່ ສປປ ລາວ ເພື່ອເຮັດໃຫ້ວຽກງານດັ່ງກ່າວມີການພັດທະນາ, ທັນສະໄໝ, ປອດໄພ ແລະ ເຊື່ອຖືໄດ້ ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ຊົມໃຊ້ ແລະ ຜູ້ຄ້າທາງເອເລັກໂຕຣນິກ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

### ມາດຕາ 2 ການຄ້າທາງເອເລັກໂຕຣນິກ

ການຄ້າທາງເອເລັກໂຕຣນິກ ແມ່ນ ການຊື້-ຂາຍ, ການແລກປ່ຽນ ສິນຄ້າ ຫຼື ການບໍລິການ ລະຫວ່າງບຸກຄົນ ຫຼື ນິຕິບຸກຄົນໂດຍນຳໃຊ້ ຊ່ອງທາງເອເລັກໂຕຣນິກ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ຄ້າ** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ທີ່ດໍາເນີນການຂາຍສິນຄ້າ ຫຼື ການບໍລິການ ທາງເອເລັກໂຕຣນິກ;
2. **ລູກຄ້າ** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ທີ່ຊື້-ຊົມໃຊ້ສິນຄ້າ ຫຼື ການບໍລິການ ທາງເອເລັກໂຕຣນິກ;
3. **ຊ່ອງທາງເອເລັກໂຕຣນິກ** ໝາຍເຖິງ ເວັບໄຊ, ໂປຣແກຣມ ຫຼື ຊຸດຄໍາສັ່ງອື່ນໆ ທີ່ນໍາໃຊ້ເຂົ້າໃນການດໍາເນີນທຸລະກິດການຄ້າທາງເອເລັກໂຕຣນິກ;
4. **ເຈົ້າຂອງຊ່ອງທາງການຄ້າທາງເອເລັກໂຕຣນິກ** ໝາຍເຖິງ ຜູ້ຄ້າ, ບຸກຄົນ ຫຼື ນິຕິບຸກຄົນ ທີ່ເປັນເຈົ້າຂອງ ເວັບໄຊ ຫຼື ໂປຣແກຣັມການຄ້າທາງເອເລັກໂຕຣນິກ.
5. **ເວັບໄຊການຄ້າທາງເອເລັກໂຕຣນິກ (E-Commerce Website)** ໝາຍເຖິງ ລະບົບຂໍ້ມູນຂ່າວສານ ທີ່ສ້າງຂຶ້ນເປັນໜ້າໜຶ່ງ ຫຼື ຫຼາຍໜ້າເວັບ ທີ່ໝາຍເຖິງຊຸດຄໍາສັ່ງ ທີ່ເປັນເຄື່ອງມື ນໍາໃຊ້ໃນການດໍາເນີນທຸລະກໍາການຄ້າທາງເອເລັກໂຕຣນິກ;
6. **ໂປຣແກຣັມການຄ້າທາງເອເລັກໂຕຣນິກ (E-Commerce Program)** ໝາຍເຖິງ ຊຸດຄໍາສັ່ງ ທີ່ບັນຊາຄອມພິວເຕີ ຫຼື ອຸປະກອນເອເລັກໂຕຣນິກ ທີ່ເປັນເຄື່ອງມື ນໍາໃຊ້ໃນການດໍາເນີນທຸລະກໍາການຄ້າທາງເອເລັກໂຕຣນິກ;
7. **ຕະຫຼາດທາງເອເລັກໂຕຣນິກ (E-Market Place)** ໝາຍເຖິງ ຊ່ອງທາງການຄ້າເອເລັກໂຕຣນິກ ທີ່ ບຸກຄົນ ຫຼື ນິຕິບຸກຄົນສ້າງຂຶ້ນ ເພື່ອໃຫ້ບໍລິການ ແກ່ ຜູ້ຊື້-ຂາຍ ສິນຄ້າ ຫຼື ການບໍລິການ ທາງເອເລັກໂຕຣນິກ;
8. **ຄໍາສັ່ງຊື້ທາງເອເລັກໂຕຣນິກ (Online Ordering Function)** ໝາຍເຖິງ ຄໍາສັ່ງທີ່ຖືກຕິດຕັ້ງໃນ ຊ່ອງທາງການຄ້າທາງເອເລັກໂຕຣນິກ ຫຼື ອຸປະກອນຮັບ ແລະ ສົ່ງຂໍ້ມູນໃດໜຶ່ງ ທີ່ເຊື່ອມຕໍ່ເຂົ້າກັບຊ່ອງທາງການຄ້າທາງເອເລັກໂຕຣນິກ ເພື່ອເຮັດໃຫ້ຜູ້ຊື້ສາມາດລິເລີ່ມສ້າງສັນຍາການຄ້າທາງເອເລັກໂຕຣນິກ ຕາມເງື່ອນໄຂທີ່ລະບຸໄວ້ໃນຊ່ອງທາງການຄ້າທາງເອເລັກໂຕຣນິກ.

### ມາດຕາ 4 ນະໂຍບາຍ ຂອງລັດກ່ຽວກັບການຄ້າທາງເອເລັກໂຕຣນິກ

ລັດ ສ້າງເງື່ອນໄຂ ແລະ ອໍານວຍຄວາມສະດວກ ໃຫ້ແກ່ການຂະຫຍາຍຕົວຂອງການຄ້າທາງເອເລັກໂຕຣນິກ ດ້ວຍການສະໜອງບຸກຄະລາກອນ, ພື້ນຖານໂຄງລ່າງ, ການສະໜອງງົບປະມານ ແລະ ອຸປະກອນທີ່ຈໍາເປັນ ຕາມຄວາມສາມາດ ແລະ ຄວາມຈໍາເປັນແຕ່ລະໄລຍະ.

ລັດ ຮັບຮູ້ ແລະ ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາ ຂອງຜູ້ຊົມໃຊ້ ແລະ ຜູ້ດໍາເນີນການຄ້າທາງເອເລັກໂຕຣນິກຕາມລະບຽບການ ແລະ ກົດໝາຍ.

### ມາດຕາ 5 ຫຼັກການກ່ຽວກັບວຽກງານການຄ້າທາງເອເລັກໂຕຣນິກ

ວຽກງານການຄ້າທາງເອເລັກໂຕຣນິກ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງ ກັບນະໂຍບາຍ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ;
2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນທົ່ວປະເທດ;
3. ຮັບປະກັນຄວາມວ່ອງໄວ, ທັນສະໄໝ, ສະເໝີພາບ, ຍຸຕິທໍາ ແລະ ປອດໄພ;
4. ສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

### ມາດຕາ 6 ຂອບເຂດການນໍາໃຊ້

ດໍາລັດສະບັບນີ້ ນໍາໃຊ້ສໍາລັບ ບຸກຄົນ ຫຼື ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ ທີ່ ເຄື່ອນໄຫວການຄ້າທາງເອເລັກໂຕຣນິກ ຢູ່ໃນ ສປປ ລາວ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ ທັງພາກພື້ນ ແລະ ສາກົນ ກ່ຽວກັບວຽກງານການຄ້າທາງເອເລັກໂຕຣນິກ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີການພັດທະນາ ແລະ ສອດຄ່ອງກັບ ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II

## ການດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ

**ມາດຕາ 8 ການດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ**

ການດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ປະກອບ ມີ ສາມ ຮູບແບບ ດັ່ງນີ້:

1. ການຄ້າຜ່ານຊ່ອງທາງເອເລັກໂຕຣນິກຂອງຕົນ;
2. ການໃຫ້ບໍລິການຕະຫຼາດ ທາງເອເລັກໂຕຣນິກ;
3. ການຄ້າໃນຕະຫຼາດ ທາງເອເລັກໂຕຣນິກ;

**ມາດຕາ 9 ການຄ້າຜ່ານຊ່ອງທາງເອເລັກໂຕຣນິກຂອງຕົນ**

ການຄ້າຜ່ານຊ່ອງທາງເອເລັກໂຕຣນິກຂອງຕົນ ແມ່ນ ຜູ້ຄ້າ ສ້າງຊ່ອງທາງເອເລັກໂຕຣນິກ ເພື່ອນຳໃຊ້ເຂົ້າໃນການດຳເນີນທຸລະກິດຂອງຕົນ.

**ມາດຕາ 10 ການໃຫ້ບໍລິການຕະຫຼາດ ທາງເອເລັກໂຕຣນິກ**

ການໃຫ້ບໍລິການຕະຫຼາດ ທາງເອເລັກໂຕຣນິກ ແມ່ນ ຜູ້ດຳເນີນທຸລະກິດ ສ້າງຊ່ອງທາງການຄ້າທາງເອເລັກໂຕຣນິກຂຶ້ນ ເພື່ອໃຫ້ບໍລິການ ແກ່ຜູ້ຄ້າອື່ນ ດຳເນີນທຸລະກິດ ໂດຍຮຽກເກັບຄ່າບໍລິການ ຫຼື ສິ່ງຕອບແທນອື່ນ.

**ມາດຕາ 11 ການຄ້າໃນຕະຫຼາດ ທາງເອເລັກໂຕຣນິກ**

ການຄ້າໃນຕະຫຼາດ ທາງເອເລັກໂຕຣນິກ ແມ່ນ ຜູ້ຄ້າ ດຳເນີນທຸລະກິດ ໃນຕະຫຼາດ ທາງເອເລັກໂຕຣນິກ ໂດຍເສຍຄ່າບໍລິການ ຫຼື ສິ່ງຕອບແທນອື່ນ ແກ່ຜູ້ໃຫ້ບໍລິການຕະຫຼາດ ທາງເອເລັກໂຕຣນິກ.

## ພາກທີ III

## ການແຈ້ງ ຫຼື ການຂໍອະນຸຍາດດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ

**ມາດຕາ 12 ການແຈ້ງ ຫຼື ການອະນຸຍາດດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ**

ການດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ຕ້ອງຜ່ານຂັ້ນຕອນການແຈ້ງ ຫຼື ການຂໍອະນຸຍາດດຳເນີນທຸລະກິດ ຕາມແຕ່ລະຮູບແບບ ກຳນົດໃນໝວດທີ່ 1 ຫຼື 2 ຂອງພາກທີ III.

### ໝວດທີ 1

### ການແຈ້ງ ແລະ ການຢັ້ງຢືນ

**ມາດຕາ 13 ການແຈ້ງດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ**

ການແຈ້ງດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ແມ່ນ ການສະໜອງຂໍ້ມູນ ຂອງບຸກຄົນ ຫຼື ນິຕິບຸກຄົນ ທີ່ຈະດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ.

ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ກ່ອນການມີຜົນບັງຄັບໃຊ້ຂອງດຳລັດສະບັບນີ້ ຕ້ອງແຈ້ງການດຳເນີນທຸລະກິດຂອງຕົນ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າຊາບ ນັບແຕ່ມື້ປະກາດໃຊ້ດຳລັດສະບັບນີ້ ເປັນຕົ້ນໄປ.

**ມາດຕາ 14 ເງື່ອນໄຂຂອງການແຈ້ງ**

ບຸກຄົນ ຫຼື ນິຕິບຸກຄົນທີ່ມີຈຸດປະສົງຕ້ອງການດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ໃນຮູບແບບ 1 ຫຼື 3 ທີ່ກຳນົດໄວ້ໃນ ມາດຕາ 8 ຂອງດຳລັດສະບັບນີ້ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ~~1.~~ ມີໃບທະບຽນວິສາຫະກິດ (ຍົກເວັ້ນທຸລະກິດທີ່ບໍ່ຈຳເປັນຕ້ອງຂຶ້ນທະບຽນວິສາຫະກິດ ຕາມກົດໝາຍວ່າດ້ວຍວິສາຫະກິດ);
2. ໄດ້ຮັບອະນຸຍາດດຳເນີນທຸລະກິດຈາກຂະແໜງການທີ່ກ່ຽວຂ້ອງ;
3. ສຳລັບຜູ້ຄ້າຜ່ານຊອງທາງເອເລັກໂຕຣນິກຂອງຕົນ ມີຊ່ອງທາງການຄ້າທາງເອເລັກໂຕຣນິກ ທີ່ຜ່ານມາດຖານດ້ານເຕັກນິກ ນຳຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຍົກເວັ້ນການນຳໃຊ້ຊ່ອງທາງສື່ສັງຄົມອອນລາຍ;
4. ມີໃບຍັ້ງຍືນຍັ້ງຢືນຈາກ ຜູ້ໃຫ້ບໍລິການຕະຫຼາດ ທາງເອເລັກໂຕຣນິກ ສຳລັບຜູ້ຄ້າໃນຕະຫຼາດ ທາງເອເລັກໂຕຣນິກ;
5. ຖືບັນຊີຂອງທະນາຄານໃດໜຶ່ງ ໃນ ສປປ ລາວ ທີ່ຕົນນຳໃຊ້ໃນການດຳເນີນທຸລະກິດ.

**ມາດຕາ 15 ເອກະສານປະກອບການແຈ້ງ**

ບຸກຄົນ ຫຼື ນິຕິບຸກຄົນທີ່ມີຈຸດປະສົງແຈ້ງດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ຕ້ອງມີ ປະກອບເອກະສານ ດັ່ງນີ້:

1. ແບບຟອມຄຳຮ້ອງ ຕາມແບບພິມຂອງກະຊວງອຸດສາຫະກຳ ແລະ ການຄ້າ;
2. ສຳເນົາໃບທະບຽນວິສາຫະກິດ(ຍົກເວັ້ນທຸລະກິດທີ່ບໍ່ຈຳເປັນຕ້ອງຂຶ້ນທະບຽນວິສາຫະກິດ ຕາມກົດໝາຍວ່າດ້ວຍວິສາຫະກິດ);
3. ສຳເນົາໃບອະນຸຍາດດຳເນີນທຸລະກິດ ຖ້າເປັນກິດຈະການທີ່ຕ້ອງຂໍອະນຸຍາດ;
4. ສຳເນົາໃບຍັ້ງຢືນມາດຖານດ້ານເຕັກນິກ ຂອງຊ່ອງທາງການຄ້າທາງເອເລັກໂຕຣນິກ ຈາກຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ສຳລັບຜູ້ຄ້າຜ່ານຊອງທາງເອເລັກໂຕຣນິກຂອງຕົນ, ຍົກເວັ້ນການນຳໃຊ້ຊ່ອງທາງສື່ສັງຄົມອອນລາຍ;
5. ໃບຍັ້ງຢືນທີ່ຢູ່ສະຖານທີ່ໃຫ້ບໍລິການຫຼັກ;
6. ສຳເນົາບັນຊີຂອງທະນາຄານໃດໜຶ່ງ ໃນ ສປປ ລາວ ທີ່ຕົນນຳໃຊ້ໃນການດຳເນີນທຸລະກິດ.

**ມາດຕາ 16 ການຢັ້ງຢືນການແຈ້ງດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ**

ການຢັ້ງຢືນການແຈ້ງດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ແມ່ນ ການຮັບຮູ້ເປັນທາງການ ໂດຍກະຊວງອຸດສາຫະກຳ ແລະ ການຄ້າ ຕໍ່ການດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ຂອງບຸກຄົນ ຫຼື ນິຕິບຸກຄົນ.

ກະຊວງອຸດສາຫະກຳ ແລະ ການຄ້າຈະພິຈາລະນາອອກໃບຢັ້ງຢືນການແຈ້ງດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ພາຍໃນ 05 ວັນ ລັດຖະການ ຫຼັງຈາກໄດ້ຮັບເອກະສານຄົບຖ້ວນ.

**ມາດຕາ 17 ການນຳໃຊ້ ແລະ ອາຍຸການນຳໃຊ້ ໃບຢັ້ງຢືນການແຈ້ງ**

ການນຳໃຊ້ໃບຢັ້ງຢືນການແຈ້ງດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ຂອງບຸກຄົນ ຫຼື ນິຕິບຸກຄົນຕ້ອງໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມຈຸດປະສົງຂອງການແຈ້ງ ແລະ ບໍ່ສາມາດມອບ, ໂອນ ຫຼື ໃຫ້ບຸກຄົນອື່ນນຳໃຊ້ແທນ.

ໃບຢັ້ງຢືນການແຈ້ງ ມີອາຍຸການນຳໃຊ້ 02 ປີ ແລະ ສາມາດຕໍ່ອາຍຸການນຳໃຊ້ໄດ້ ໃນແຕ່ລະ 02 ປີ ຊຶ່ງຜູ້ທີ່ມີຈຸດປະສົງສືບຕໍ່ດຳເນີນທຸລະກິດ ຕ້ອງຍື່ນຄຳຮ້ອງຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ ຢ່າງໜ້ອຍ 30 ວັນລັດຖະການ ເພື່ອພິຈາລະນາ ກ່ອນໝົດອາຍຸການນຳໃຊ້ໃບຢັ້ງຢືນ.

## ໝວດທີ 2

## ການຂໍອະນຸຍາດດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ

### ມາດຕາ 18 ການຂໍອະນຸຍາດດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ

ການຂໍອະນຸຍາດດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ແມ່ນການສະເໜີ ຂໍສິດໃນການດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ.

ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ດຳເນີນທຸລະກິດ ກ່ອນການມີຜົນບັງຄັບໃຊ້ຂອງດຳລັດສະບັບນີ້ ຕ້ອງຂໍອະນຸຍາດດຳເນີນທຸລະກິດ ນັບແຕ່ມື້ປະກາດໃຊ້ດຳລັດສະບັບນີ້ ເປັນຕົ້ນໄປ.

### ມາດຕາ 19 ເງື່ອນໄຂຂອງການຂໍອະນຸຍາດ

ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຈຸດປະສົງ ດຳເນີນທຸລະກິດໃຫ້ບໍລິການ ຕະຫຼາດທາງເອເລັກໂຕຣນິກ ຕ້ອງມີເງື່ອນໄຂ ດັ່ງນີ້:

~~1.~~ ມີໃບທະບຽນວິສາຫະກິດ ຖືກຕ້ອງຕາມກົດໝາຍວ່າດ້ວຍວິສາຫະກິດ ຂອງ ສປປ ລາວ;
2. ມີຜູ້ບໍລິຫານ ທີ່ຖືສັນຊາດລາວ ແລະ ມີພູມລຳເນົາຢູ່ ສປປ ລາວ ຢ່າງໜ້ອຍ ໜຶ່ງຄົນ;
3. ມີຊ່ອງທາງການຄ້າທາງເອເລັກໂຕຣນິກ ທີ່ຜ່ານມາດຖານດ້ານເຕັກນິກ ນຳຂະແໜງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;
4. ຖືບັນຊີຂອງທະນາຄານໃດໜຶ່ງ ໃນ ສປປ ລາວ ທີ່ຕົນນຳໃຊ້ໃນການດຳເນີນທຸລະກິດ.

### ມາດຕາ 20 ເອກະສານປະກອບການຂໍອະນຸຍາດ

ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຈຸດປະສົງດຳເນີນທຸລະກິດໃຫ້ບໍລິການຕະຫຼາດ ທາງເອເລັກໂຕຣນິກ ຕ້ອງມີເອກະສານປະກອບການຂໍອະນຸຍາດ ດັ່ງນີ້:

1. ຄຳຮ້ອງ ຕາມແບບພິມຂອງກະຊວງອຸດສາຫະກຳ ແລະ ການຄ້າ;
2. ສຳເນົາໃບທະບຽນວິສາຫະກິດ;
3. ສຳເນົາໃບຢັ້ງຢືນທີ່ຕັ້ງສຳນັກງານໃຫຍ່;
4. ແຜນດຳເນີນທຸລະກິດ ຢ່າງລະອຽດ;
5. ໃບຢັ້ງຢືນມາດຖານດ້ານເຕັກນິກຂອງຊ່ອງທາງການຄ້າທາງເອເລັກໂຕຣນິກ ຈາກຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;
6. ສຳເນົາບັນຊີຂອງທະນາຄານໃດໜຶ່ງ ໃນ ສປປ ລາວ ທີ່ຕົນນຳໃຊ້ໃນການດຳເນີນທຸລະກິດ.

### ມາດຕາ 21 ທຶນຈົດທະບຽນສຳລັບນັກລົງທຶນຕ່າງປະເທດ

ບຸກຄົນ ຫຼື ນິຕິບຸກຄົນຕ່າງປະເທດ ທີ່ມີຈຸດປະສົງດຳເນີນທຸລະກິດໃຫ້ບໍລິການຕະຫຼາດທາງເອເລັກໂຕຣນິກ ໃນ ສປປ ລາວ ຕ້ອງມີທຶນຈົດທະບຽນ ດັ່ງນີ້:

1. ທຶນຈົດທະບຽນ 30 ຕື້ກີບ ຂຶ້ນໄປ ສາມາດຖືຮຸ້ນໄດ້ 100 ສ່ວນຮ້ອຍ;
2. ທຶນຈົດທະບຽນ ຕ່ຳກວ່າ 30 ຕື້ກີບ ແຕ່ບໍ່ຫຼຸດ 20 ຕື້ກີບ ສາມາດຖືຮຸ້ນໄດ້ ບໍ່ເກີນ 70 ສ່ວນຮ້ອຍ;

3. ທຶນຈົດທະບຽນ ຕ່ຳກວ່າ 20 ຕື້ກີບ ແຕ່ບໍ່ຫຼຸດ 10 ຕື້ກີບ ສາມາດຖືຮຸ້ນໄດ້ ບໍ່ເກີນ 50 ສ່ວນຮ້ອຍ.

**ມາດຕາ 22 ການພິຈາລະນາ**

ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງພິຈາລະນາການຂໍອະນຸຍາດດຳເນີນທຸລະກິດໃຫ້ບໍລິການຕະຫຼາດທາງເອເລັກໂຕຣນິກ, ອອກໃບອະນຸຍາດ ພາຍໃນເວລາ 05 ວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານປະກອບ ຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ. ກໍລະນີຄຳຮ້ອງ ຖືກປະຕິເສດ ຕ້ອງແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ ພາຍໃນເວລາ 03 ວັນ.

ໃນເວລາພິຈາລະນາການຂໍອະນຸຍາດດຳເນີນທຸລະກິດໃຫ້ບໍລິການຕະຫຼາດເອເລັກໂຕຣນິກ ຖ້າເຫັນວ່າມີຄວາມຈຳເປັນ ກະຊວງອຸດສາຫະກຳ ແລະ ການຄ້າ ມີສິດທວງເອົາເອກະສານ ແລະ ຂໍ້ມູນເພີ່ມຕື່ມ ຈາກຜູ້ທີ່ມີຈຸດປະສົງຂໍອະນຸຍາດດຳເນີນທຸລະກິດໃຫ້ບໍລິການຕະຫຼາດເອເລັກໂຕຣນິກ ຫຼື ເຊີນພາກສ່ວນທີ່ກ່ຽວຂ້ອງມາປຶກສາຫາລື.

**ມາດຕາ 23 ການນຳໃຊ້ ແລະ ອາຍຸການນຳໃຊ້**

ການນຳໃຊ້ໃບອະນຸຍາດ ດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ຂອງບຸກຄົນ ຫຼື ນິຕິບຸກຄົນ ຕ້ອງໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມຈຸດປະສົງຂອງການຂໍອະນຸຍາດ ແລະ ບໍ່ສາມາດມອບ, ໂອນ ຫຼື ໃຫ້ບຸກຄົນອື່ນນຳໃຊ້ແທນ.

ໃບອະນຸຍາດ ມີອາຍຸການນຳໃຊ້ 03 ປີ, ສາມາດຕໍ່ອາຍຸການນຳໃຊ້ໄດ້ ຊຶ່ງຜູ້ທີ່ມີຈຸດປະສົງສືບຕໍ່ດຳເນີນທຸລະກິດ ຕ້ອງຍື່ນຄຳຮ້ອງຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ ຢ່າງໜ້ອຍ 30 ວັນ ເພື່ອພິຈາລະນາກ່ອນໝົດອາຍຸການນຳໃຊ້.

## ພາກທີ IV
## ສັນຍາການຄ້າທາງເອເລັກໂຕຣນິກ
### ໝວດທີ 1
### ສັນຍາການຄ້າທາງເອເລັກໂຕຣນິກ

**ມາດຕາ 24 ສັນຍາການຄ້າທາງເອເລັກໂຕຣນິກ**

ສັນຍາການຄ້າທາງເອເລັກໂຕຣນິກ ແມ່ນ ການຕົກລົງ ລະຫວ່າງ ຜູ້ຄ້າ ແລະ ລູກຄ້າ ໃນການຊື້, ການຂາຍ ຫຼື ການແລກປ່ຽນ ສິນຄ້າ ຫຼື ການບໍລິການ ທາງເອເລັກໂຕຣນິກ ໂດຍປະກອບມີ ສອງ ຮູບແບບ ຕົ້ນຕໍ ດັ່ງນີ້:

1. ສັນຍາການຄ້າທາງເອເລັກໂຕຣນິກ ຜ່ານລະບົບຄຳສັ່ງຊື້;
2. ສັນຍາການຄ້າທາງເອເລັກໂຕຣນິກ ຜ່ານສື່ສັງຄົມອອນລາຍ.

ດຳລັດສະບັບນີ້ບໍ່ນຳໃຊ້ສຳລັບ ສັນຍາຊື້-ຂາຍ, ໂອນ ຫຼື ມອບກຳມະສິດ ຫຼື ຜົນປະໂຫຍດກ່ຽວກັບທີ່ດິນ ຫຼື ອະສັງຫາລິມະຊັບອື່ນ ແລະ ທຸລະກຳອື່ນໆ ດັ່ງທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍທຸລະກຳທາງເອເລັກໂຕຣນິກ.

**ມາດຕາ 25 ການສະເໜີສ້າງສັນຍາການຄ້າທາງເອເລັກໂຕຣນິກ**

ການສະເໜີສ້າງສັນຍາການຄ້າທາງເອເລັກໂຕຣນິກ ແມ່ນ ການສະແດງເຈດຈຳນົງຂອງລູກຄ້າ ໃນການສັ່ງຊື້ ສິນຄ້າ ຫຼື ການບໍລິການ ຜ່ານລະບົບຄຳສັ່ງຊື້ທາງເອເລັກໂຕຣນິກ ຫຼື ຜ່ານສື່ສັງຄົມອອນລາຍ ຕາມຂໍ້ມູນ ແລະ ເງື່ອນໄຂທີ່ຜູ້ຄ້າກຳນົດໄວ້ໃນຊ່ອງທາງເອເລັກໂຕຣນິກ.

ການສະເໜີສ້າງສັນຍາການຄ້າທາງເອເລັກໂຕຣນິກ ຂອງລູກຄ້າ ຕ້ອງດຳເນີນໃນຮູບແບບທີ່ເໝາະສົມໃດໜຶ່ງ ທີ່ສາມາດນຳມາ ບັນທຶກ, ພິມ ຫຼື ສະແດງ ໃນລະບົບຂໍ້ມູນຂ່າວສານຂອງຜູ້ຄ້າ ຫຼື ລູກຄ້າໄດ້ໃນພາຍຫຼັງ.

**ມາດຕາ 26 ການຕອບຮັບ ຫຼື ການປະຕິເສດ ການສະເໜີສ້າງສັນຍາການຄ້າທາງເອເລັກໂຕຣນິກ**

ການຕອບຮັບສັນຍາການຄ້າທາງເອເລັກໂຕຣນິກ ແມ່ນ ຜູ້ຄ້າ ຢືນຢັນ ແລະ ຕອບຮັບ ການສະເໜີສ້າງສັນຍາຂອງລູກຄ້າ ຜ່ານລະບົບຄຳສັ່ງຊື້ທາງເອເລັກໂຕຣນິກ ຫຼື ຜ່ານສື່ສັງຄົມອອນລາຍຂອງຕົນ.

ການປະຕິເສດສັນຍາການຄ້າທາງເອເລັກໂຕຣນິກ ແມ່ນ ຜູ້ຄ້າ ບໍ່ຢືນຢັນ ຫຼື ປະຕິເສດ ການສະເໜີສ້າງສັນຍາຂອງລູກຄ້າ ຜ່ານລະບົບຄຳສັ່ງຊື້ທາງເອເລັກໂຕຣນິກ ຫຼື ຜ່ານສື່ສັງຄົມອອນລາຍຂອງຕົນ.

ການຕອບຮັບ ຫຼື ປະຕິເສດ ຕໍ່ຂໍ້ສະເໜີການສ້າງສັນຍາການຄ້າທາງເອເລັກໂຕຣນິກ ຂອງລູກຄ້າຕ້ອງດຳເນີນໃນຮູບແບບ ທີ່ເໝາະສົມໃດໜຶ່ງ ທີ່ສາມາດນຳມາ ບັນທຶກ, ພິມ ແລະ ສະແດງ ໃນລະບົບຂໍ້ມູນຂ່າວສານຂອງຜູ້ຄ້າ ຫຼື ລູກຄ້າໄດ້ໃນພາຍຫຼັງ.

**ມາດຕາ 27 ການສິ້ນສຸດການສະເໜີສ້າງສັນຍາການຄ້າທາງເອເລັກໂຕຣນິກ**

ການສະເໜີສ້າງສັນຍາການຄ້າທາງເອເລັກໂຕຣນິກ ຂອງລູກຄ້າ ຈະສິ້ນສຸດລົງ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຜູ້ຄ້າບໍ່ຕອບກັບ ພາຍໃນເວລາ ທີ່ຜູ້ຄ້າກຳນົດໄວ້ໃນຊ່ອງທາງການຄ້າເອເລັກໂຕຣນິກຂອງຕົນ;
2. ຜູ້ຄ້າບໍ່ຕອບກັບ ພາຍໃນເວລາ 12 ຊົ່ວໂມງ ພາຍຫຼັງມີການສະເໜີສ້າງສັນຍາ ໃນກໍລະນີທີ່ສັນຍາບໍ່ໄດ້ກຳນົດເວລາ;
3. ຜູ້ຄ້າປະຕິເສດຂໍ້ສະເໜີສ້າງສັນຍາຂອງລູກຄ້າ;
4. ລູກຄ້າຍົກເລີກການສະເໜີສ້າງສັນຍາຂອງຕົນ ກ່ອນໄດ້ຮັບການຕອບກັບ.

**ມາດຕາ 28 ການມີຜົນສັກສິດຂອງສັນຍາການຄ້າທາງເອເລັກໂຕຣນິກ**

ສັນຍາການຄ້າທາງເອເລັກໂຕຣນິກ ທີ່ສ້າງຜ່ານລະບົບຄຳສັ່ງຊື້ທາງເອເລັກໂຕຣນິກ ຫຼື ຜ່ານສື່ສັງຄົມອອນລາຍ ຈະມີຜົນກໍຕໍ່ເມື່ອ ຜູ້ຄ້າຕອບຮັບຂໍ້ສະເໜີສ້າງສັນຍາຂອງລູກຄ້າ ຕາມເງື່ອນໄຂ ແລະ ເວລາທີ່ກຳນົດ.

**ມາດຕາ 29 ການປ່ຽນແປງສັນຍາການຄ້າທາງເອເລັກໂຕຣນິກ**

ຄູ່ສັນຍາສາມາດປ່ຽນແປງ ສັນຍາການຄ້າທາງເອເລັກໂຕຣນິກ ຕາມການຕົກລົງເຫັນດີຂອງຄູ່ສັນຍາ ຊຶ່ງການປ່ຽນແປງໃໝ່ນັ້ນ ຈະມີຜົນກໍ່ຕໍ່ເມື່ອຖືກດຳເນີນຕາມຂັ້ນຕອນການສະເໜີ ແລະ ການຕອບຮັບສັນຍາການຄ້າທາງເອເລັກໂຕຣນິກ ຫຼື ວິທີການອື່ນ ຕາມກົດໝາຍວ່າດ້ວຍ ຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ.

**ມາດຕາ 30 ການສິ້ນສຸດສັນຍາການຄ້າທາງເອເລັກໂຕຣນິກ**

ສັນຍາການຄ້າທາງເອເລັກໂຕຣນິກ ຈະສິ້ນສຸດລົງ ເມື່ອໄດ້ຖືກຈັດຕັ້ງປະຕິບັດຢ່າງຖືກຕ້ອງ ແລະ ຄົບຖ້ວນແລ້ວ ຫຼື ຕາມກໍລະນີອື່ນ ຕາມກຳນົດໄວ້ໃນກົດໝາຍວ່າດ້ວຍ ຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ.

**ມາດຕາ 31 ການລະເມີດສັນຍາການຄ້າທາງເອເລັກໂຕຣນິກ**

ການລະເມີດສັນຍາການຄ້າທາງເອເລັກໂຕຣນິກ ແມ່ນ ການບໍ່ປະຕິບັດຕາມສັນຍາທີ່ຕົກລົງກັນໄວ້ ຈະເປັນທັງໝົດ ຫລື ບາງສ່ວນ ຂອງສັນຍາ ກໍໄດ້ ເຊັ່ນ: ບໍ່ຖືກຄຸນລັກສະນະ ຂອງ ສິນຄ້າ ແລະ ການບໍລິການ, ບໍ່ປະຕິບັດຕາມເວລາ ແລະ ສະຖານທີ່ ທີ່ກຳນົດໄວ້ໃນສັນຍາ ຫຼື ປະຕິເສດການປະຕິບັດສັນຍາ.

ໃນກໍລະນີ ຄູ່ສັນຍາຝ່າຍໃດຫນຶ່ງ ຫາກລະເມີດສັນຍາການຄ້າທາງເອເລັກໂຕຣນິກທີ່ໄດ້ຕົກລົງກັນ ຝ່າຍນັ້ນ ຕ້ອງຮັບຜິດຊອບ ໃຊ້ແທນຄ່າເສຍຫາຍທີ່ເກີດຂຶ້ນ ເວັ້ນເສຍແຕ່ການລະເມີດສັນຍານັ້ນ ຫາກເກີດຂຶ້ນຍ້ອນເຫດສຸດວິໄສ.

## ໝວດທີ 2

## ສັນຍາການຄ້າທາງເອເລັກໂຕຣນິກຜ່ານລະບົບຄຳສັ່ງຊື້

**ມາດຕາ 32 ສັນຍາການຄ້າທາງເອເລັກໂຕຣນິກຜ່ານລະບົບຄຳສັ່ງຊື້**

ສັນຍາການຄ້າທາງເອເລັກໂຕຣນິກຜ່ານລະບົບຄຳສັ່ງຊື້ ແມ່ນ ການຕົກລົງ ລະຫວ່າງ ຜູ້ຄ້າ ແລະ ລູກຄ້າ ໃນການຊື້, ການຂາຍ ຫຼື ການແລກປ່ຽນສິນຄ້າ ຫຼື ການບໍລິການ ທາງເອເລັກໂຕຣນິກ ຜ່ານລະບົບຄຳສັ່ງຊື້ ທີ່ທາງເຈົ້າຂອງຊ່ອງທາງເອເລັກໂຕຣນິກສ້າງຂຶ້ນ.

**ມາດຕາ 33 ເນື້ອໃນຂອງສັນຍາການຄ້າທາງເອເລັກໂຕຣຜ່ານລະບົບຄຳສັ່ງຊື້**

ເນື້ອໃນ ທີ່ກຳນົດຢູ່ໃນສັນຍາຜ່ານລະບົບຄຳສັ່ງຊື້ ທີ່ກຳນົດໃນຊ່ອງທາງເອເລັກໂຕຣນິກ ຕ້ອງປະກອບມີຂໍ້ມູນພື້ນຖານ ດັ່ງນີ້:

1. ຊື່ຂອງສິນຄ້າ ຫຼື ການບໍລິການ, ຂະໜາດ, ປະເພດ ແລະ ລາຍລະອຽດສຳຄັນອື່ນໆ ຕາມສະຫຼາກຂອງສິນຄ້າ ຫຼື ການບໍລິການ;
2. ວິທີການ ແລະ ເວລາ ໃນການຊຳລະ, ການນຳສົ່ງສິນຄ້າ ຫຼື ສະໜອງການບໍລິການ;
3. ລາຄາຂອງສິນຄ້າ ຫຼື ການບໍລິການ, ມູນຄ່າລວມຂອງການສັ່ງຊື້ສິນຄ້າ ຫຼື ການບໍລິການ;
4. ເງື່ອນໄຂຂອງການປ່ຽນແປງ, ລະເມີດ ແລະ ສິ້ນສຸດ ຫຼື ຍົກເລີກສັນຍາ;
5. ຊື່, ທີ່ຢູ່, ເບີໂທ, ອີເມລ ແລະ ຂໍ້ມູນອື່ນໆຂອງລູກຄ້າ.

ຂໍ້ມູນໃນຂໍ້ 1 ທີ່ຕິດພັນກັບຄຸນະພາບຂອງສິນຄ້າ ຫຼື ການບໍລິການ ຕ້ອງແມ່ນອັນດຽວກັບຂໍ້ມູນທີ່ໄດ້ສະແດງໃນຊ່ອງທາງການຄ້າທາງເອເລັກໂຕຣນິກ ທີ່ໄດ້ສະແດງໃນເບື້ອງຕົ້ນ.

ຂໍ້ມູນດັ່ງກ່າວຂ້າງເທິງ ຈະຕ້ອງສາມາດ ບັນທຶກ, ພິມ ແລະ ສະແດງ ໃນລະບົບຂໍ້ມູນຂ່າວສານທາງເອເລັກໂຕຣນິກຂອງລູກຄ້າ ຊຶ່ງສາມາດເຂົ້າເຖິງໄດ້ໃນພາຍຫຼັງ.

**ມາດຕາ 34 ການທົບທວນ ແລະ ຢືນຢັນເນື້ອໃນຂອງສັນຍາການຄ້າທາງເອເລັກໂຕຣນິກຜ່ານລະບົບຄຳສັ່ງຊື້**

ເຈົ້າຂອງຊ່ອງທາງການຄ້າທາງເອເລັກໂຕຣນິກ ຕ້ອງມີກົນໄກໃຫ້ລູກຄ້າສາມາດກວດຄືນ, ເພີ່ມເຕີມ, ປັບປຸງ, ຢືນຢັນ ຫຼື ຍົກເລີກ ເນື້ອໃນຂໍ້ສະເໜີສ້າງສັນຍາ ກ່ອນທີ່ລູກຄ້າ ຈະດຳເນີນການສົ່ງຂໍ້ສະເໜີດັ່ງກ່າວຜ່ານລະບົບຄຳສັ່ງຊື້ທາງເອເລັກໂຕຣນິກ.

**ມາດຕາ 35 ການຍົກເລີກສັນຍາການຄ້າທາງເອເລັກໂຕຣນິກຜ່ານລະບົບຄຳສັ່ງຊື້.**

ເຈົ້າຂອງຊ່ອງທາງການຄ້າທາງເອເລັກໂຕຣນິກ ຕ້ອງມີກົນໄກໃຫ້ລູກຄ້າສາມາດແຈ້ງຍົກເລີກຜ່ານຊ່ອງທາງເອເລັກໂຕຣນິກ ຫຼື ຊ່ອງທາງອື່ນທີ່ສາມາດ ບັນທຶກ ແລະ ສະແດງ ຂໍ້ມູນກ່ຽວກັບການແຈ້ງຍົກເລີກ

ສັນຍາ ດັ່ງກ່າວ. ພ້ອມກັນນັ້ນ, ຜູ້ຄ້າ ຕ້ອງສະໜອງຂໍ້ມູນ ແລະ ເງື່ອນໄຂ ຂອງການຍົກເລີກສັນຍາ ຢ່າງຄົບຖ້ວນ ຈະແຈ້ງ ແລະ ໂປ່ງໃສ.

ຜູ້ຄ້າ ຕ້ອງແຈ້ງຕອບການສະເໜີຍົກເລີກສັນຍາຂອງລູກຄ້າ, ໃນກໍລະນີທີ່ ຜູ້ຄ້າ ບໍ່ແຈ້ງຕອບ ພາຍໃນ 12 ຊົ່ວໂມງ ໃຫ້ຖືວ່າການຍົກເລີກສັນຍາ ແມ່ນ ມີຜົນສັກສິດ.

ເຈົ້າຂອງຊ່ອງທາງການຄ້າທາງເອເລັກໂຕຣນິກ ຕ້ອງສະແດງຂໍ້ມູນຢ່າງຄົບຖ້ວນ, ຈະແຈ້ງ ແລະ ໂປ່ງໃສ ກ່ຽວກັບຂັ້ນຕອນ ແລະ ຂະບວນການ ໃນການຍົກເລີກສັນຍາ ຊຶ່ງປະກອບມີເນື້ອໃນ ດັ່ງນີ້:

1. ກໍລະນີ ເຈົ້າຂອງຊ່ອງທາງການຄ້າທາງເອເລັກໂຕຣນິກອະນຸຍາດ ໃຫ້ຜູ້ຊື້ຍົກເລີກສັນຍາ ຕ້ອງມີວິທີດຳເນີນການ ຕໍ່ກັບຜົນສະທ້ອນຂອງການຍົກເລີກສັນຍາພ້ອມ;
2. ວັນ ແລະ ເວລາ ຂອງການຍົກເລີກສັນຍາ ແລະ ວິທີການຊຳລະຄ່າບໍລິການປັບໃໝ ໃນ ກໍລະນີທີ່ ຜູ້ຊື້ຍົກເລີກສັນຍາ.

## ໝວດທີ 3
## ສັນຍາການຄ້າທາງເອເລັກໂຕຣນິກຜ່ານສື່ສັງຄົມອອນລາຍ

### ມາດຕາ 36 ສັນຍາການຄ້າທາງເອເລັກໂຕຣນິກຜ່ານສື່ສັງຄົມອອນລາຍ

ສັນຍາການຄ້າທາງເອເລັກໂຕຣນິກຜ່ານສື່ສັງຄົມອອນລາຍ ແມ່ນ ສັນຍາທີ່ຜູ້ຄ້າ ແລະ ລູກຄ້າ ໄດ້ມີການສື່ສານ ແລະ ຕົກລົງກັນເພື່ອຊື້, ຂາຍ ຫຼື ແລກປ່ຽນ ສິນຄ້າ ຫຼື ການບໍລິການ ຜ່ານສື່ສັງຄົມອອນລາຍ.

### ມາດຕາ 37 ເນື້ອໃນຂອງສັນຍາການຄ້າທາງເອເລັກໂຕຣນິກຜ່ານສື່ສັງຄົມອອນລາຍ

ສັນຍາການຄ້າທາງເອເລັກໂຕຣນິກ ຜ່ານສື່ສັງຄົມອອນລາຍ ຕ້ອງປະກອບມີເນື້ອໃນພື້ນຖານ ດັ່ງນີ້:

1. ຊື່ຂອງສິນຄ້າ ຫຼື ການບໍລິການ, ຂະໜາດ, ປະເພດ ແລະ ລາຍລະອຽດສຳຄັນອື່ນໆ ຕາມ ລັກສະນະຂອງສິນຄ້າ ຫຼື ການບໍລິການ;
2. ວິທີການ ແລະ ເວລາ ໃນການຊຳລະ, ການນຳສົ່ງສິນຄ້າ ຫຼື ສະໜອງການບໍລິການ;
3. ລາຄາຂອງສິນຄ້າ ຫຼື ການບໍລິການ;
4. ເງື່ອນໄຂຂອງການປ່ຽນແປງ, ລະເມີດ ແລະ ສິ້ນສຸດ ຫຼື ຍົກເລີກສັນຍາ.

ຂໍ້ມູນໃນຂໍ້ 1 ທີ່ຕິດພັນກັບກັບຄຸນນະພາບຂອງສິນຄ້າ ຫຼື ການບໍລິການ ຕ້ອງແມ່ນອັນດຽວກັບຂໍ້ມູນທີ່ ໄດ້ສະແດງໃນຊ່ອງທາງການຄ້າທາງເອເລັກໂຕຣນິກ ທີ່ໄດ້ສະແດງໃນເບື້ອງຕົ້ນ.

ຂໍ້ມູນດັ່ງກ່າວຂ້າງເທິງ ຈະຕ້ອງສາມາດ ບັນທຶກ, ພິມ ແລະ ສະແດງ ໃນບັນຊີສື່ສັງຄົມອອນລາຍ ຂອງຜູ້ຄ້າ ຫຼື ລູກຄ້າ ຊຶ່ງສາມາດເຂົ້າເຖິງໄດ້ໃນພາຍຫຼັງ.

# ພາກທີ V
# ການສະໜອງ ແລະ ການປົກປ້ອງຂໍ້ມູນ ໃນຊ່ອງທາງການຄ້າທາງເອເລັກໂຕຣນິກ

### ມາດຕາ 38 ການສະໜອງຂໍ້ມູນ

ການສະໜອງຂໍ້ມູນ ແມ່ນການສະແດງຂໍ້ມູນຕົວຈິງ ກ່ຽວກັບ ສິນຄ້າ ຫຼື ການບໍລິການ ແລະ ເງື່ອນໄຂ ຂອງການຊື້, ການຂາຍ ແລະ ການແລກປ່ຽນ ໃນຊ່ອງທາງການຄ້າທາງເອເລັກໂຕຣນິກ.

**ມາດຕາ 39 ເນື້ອໃນການສະໜອງຂໍ້ມູນ**

ການສະໜອງຂໍ້ມູນຕ້ອງຮັບປະກັນ ຄວາມໂປ່ງໃສ, ຈະແຈ້ງ, ລະອຽດ, ຄົບຖ້ວນ, ຖືກຕ້ອງ, ທັນການ, ເຂົ້າໃຈໄດ້ງ່າຍ ແລະ ເຊື່ອຖືໄດ້.

ຜູ້ຄ້າ ຕ້ອງສະໜອງບັນດາຂໍ້ມູນພື້ນຖານ ໃນຕອນວາງຈຳໜ່າຍສິນຄ້າ ຫຼື ການບໍລິການ ດັ່ງນີ້:

1. ຂໍ້ມູນກ່ຽວກັບຜູ້ດຳເນີນທຸລະກິດ (ເຊັ່ນວ່າ: ຊື່, ທີ່ຢູ່ຖາວອນ, ຂໍ້ມູນຕິດຕໍ່, ໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດດຳເນີນທຸລະກິດ);
2. ຂໍ້ມູນກ່ຽວກັບສິນຄ້າ ຫຼື ການບໍລິການ (ເຊັ່ນວ່າ: ຂະໜາດ, ສີ, ຮູບປະພັນ ແລະ ລັກສະນະສະເພາະອື່ນ) ໃຫ້ຖືກຕ້ອງຕາມສະຫຼາກ;
3. ຂໍ້ມູນກ່ຽວກັບລາຄາ (ເຊັ່ນວ່າ: ລາຄາສິນຄ້າ ຫຼື ການບໍລິການ ຕໍ່ຫົວໜ່ວຍ ຫລື ຕໍ່ຄັ້ງ ແລະ ຄ່າໃຊ້ຈ່າຍອື່ນທີ່ກ່ຽວຂ້ອງ);
4. ຂໍ້ມູນກ່ຽວກັບການຈັດສົ່ງ (ເຊັ່ນວ່າ: ຮູບແບບການຈັດສົ່ງ, ເວລາກຳນົດ ແລະ ມູນຄ່າການຈັດສົ່ງ);
5. ຂໍ້ມູນກ່ຽວກັບການຊຳລະ (ເຊັ່ນວ່າ: ຮູບແບບການຊຳລະ ແລະ ໄລຍະເວລາການຊຳລະ);
6. ຂໍ້ມູນກ່ຽວກັບຄວາມພໍໃຈຂອງລູກຄ້າ (ເຊັ່ນວ່າ: ເນື້ອໃນ ແລະ ຈຳນວນ ຄຳເຫັນຂອງລູກຄ້າຕໍ່ກັບສິນຄ້າ ແລະ ການບໍລິການ);
7. ຂໍ້ມູນກ່ຽວກັບເງື່ອນໄຂ ແລະ ຂໍ້ກຳນົດຂອງທຸລະກຳການຄ້າທາງເອເລັກໂຕຣນິກ (ເຊັ່ນວ່າ: ແຫຼ່ງທີ່ມາຂອງສິນຄ້າ ຫຼື ການບໍລິການ, ນະໂຍບາຍການສົ່ງຄືນ ແລະ ການຮັບປະກັນສິນຄ້າ ຫຼື ການບໍລິການ).

ສຳລັບການສະໜອງຂໍ້ມູນໃນຂໍ້ 6 ແມ່ນໃຫ້ເປັນທາງເລືອກຂອງ ຜູ້ຄ້າ ທີ່ດຳເນີນການຄ້າຜ່ານສື່ສັງຄົມອອນລາຍ ໃນການສະໜອງຂໍ້ມູນດັ່ງກ່າວ.

ການສະໜອງຂໍ້ມູນດັ່ງກ່າວຕ້ອງສາມາດເກັບຮັກສາ, ພິມ ແລະ ສະແດງ ໃນລະບົບຂໍ້ມູນຂ່າວສານຂອງລູກຄ້າ ຊຶ່ງສາມາດເຂົ້າເຖິງໄດ້ໃນພາຍຫຼັງ.

**ມາດຕາ 40 ການປົກປ້ອງຂໍ້ມູນ**

ການປົກປ້ອງຂໍ້ມູນໃນຊ່ອງທາງການຄ້າທາງເອເລັກໂຕຣນິກ ແມ່ນ ການນຳໃຊ້ວິທີການ ແລະ ມາດຕະການ ເພື່ອປ້ອງກັນບໍ່ໃຫ້ມີການເຂົ້າເຖິງ, ນຳໃຊ້, ເປີດເຜີຍ, ດັດແປງ, ສົ່ງ, ໂອນ ຫຼື ທຳລາຍຂໍ້ມູນສ່ວນບຸກຄົນທີ່ເກັບຮັກສາໄວ້ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງຂໍ້ມູນ ຫຼື ອົງການຄຸ້ມຄອງທີ່ກ່ຽວຂ້ອງ.

ໃນການດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ, ຖ້າເຈົ້າຂອງຊ່ອງທາງເອເລັກໂຕຣນິກ ຫຼື ບຸກຄົນອື່ນ ດຳເນີນການເກັບກຳຂໍ້ມູນສ່ວນບຸກຄົນຂອງລູກຄ້າ ຈະຕ້ອງປະຕິບັດຕາມກົດໝາຍວ່າດ້ວຍການປົກປ້ອງຂໍ້ມູນເອເລັກໂຕຣນິກ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ.

ໃນກໍລະນີ ເຈົ້າຂອງຊ່ອງທາງເອເລັກໂຕຣນິກ ມອບສິດ ໃຫ້ບຸກຄົນອື່ນ ດຳເນີນການເກັບກຳຂໍ້ມູນຂອງລູກຄ້າ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີສັນຍາລະຫວ່າງເຈົ້າຂອງຊ່ອງທາງເອເລັກໂຕຣນິກ ແລະ ຜູ້ເກັບກຳຂໍ້ມູນ ໂດຍລະບຸຄວາມຮັບຜິດຊອບຂອງແຕ່ລະຝ່າຍ ຕໍ່ຂໍ້ມູນຂອງລູກຄ້າຢ່າງຈະແຈ້ງ.
2. ຖ້າຫາກບໍ່ມີສັນຍາ ຫຼື ສັນຍາບໍ່ໄດ້ກຳນົດຢ່າງຈະແຈ້ງ ກ່ຽວກັບການແບ່ງຄວາມຮັບຜິດຊອບ ລະຫວ່າງແຕ່ລະຝ່າຍ, ເຈົ້າຂອງຊ່ອງທາງເອເລັກໂຕຣນິກ ຈະຕ້ອງຮັບຜິດຊອບຕໍ່ກັບຂໍ້ມູນຂອງລູກຄ້າ.

# ພາກທີ VI

# ສະມາຄົມທຸລະກິດການຄ້າທາງເອເລັກໂຕຣນິກ

**ມາດຕາ 41 ສະມາຄົມທຸລະກິດການຄ້າທາງເອເລັກໂຕຣນິກ**

ສະມາຄົມທຸລະກິດການຄ້າທາງເອເລັກໂຕຣນິກ ແມ່ນ ອົງການຈັດຕັ້ງສັງຄົມທີ່ບໍ່ຫວັງຜົນກຳໄລ ຊຶ່ງສ້າງຕັ້ງຂຶ້ນ ເພື່ອເຕົ້າໂຮມເອົາບັນດາຫົວໜ່ວຍທຸລະກິດການຄ້າທາງເອເລັກໂຕຣນິກ ມີພາລະບົດບາດປະສານສົມທົບກັບອົງການຄຸ້ມຄອງວຽກງານການຄ້າທາງເອເລັກໂຕຣນິກ, ໃຫ້ການຊ່ວຍເຫຼືອ, ໃຫ້ຄຳປຶກສາ, ໃຫ້ຄຳແນະນຳ ແລະ ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງສະມາຊິກ.

**ມາດຕາ 42 ສິດ ແລະ ໜ້າທີ່ ຂອງສະມາຄົມທຸລະກິດການຄ້າທາງເອເລັກໂຕຣນິກ**

ສະມາຄົມທຸລະກິດການຄ້າທາງເອເລັກໂຕຣນິກມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ນິຕິກຳ ແລະ ຂໍ້ມູນຂ່າວສານທຸລະກິດ ໃຫ້ສະມາຊິກ;
2. ຄົ້ນຄວ້າ ແລະ ນຳສະເໜີຄຳເຫັນກ່ຽວກັບການສ້າງ ແລະ ປັບປຸງນິຕິກຳ ສະເໜີຕໍ່ອົງການຄຸ້ມຄອງ;
3. ເປັນຂົວຕໍ່ລະຫວ່າງອົງການຄຸ້ມຄອງ ແລະ ສະມາຊິກ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກ;
4. ໄດ້ຮັບຂໍ້ມູນຈາກສະມາຊິກຂອງສະມາຄົມ ແລະ ອົງການຄຸ້ມຄອງ;
5. ຕິດຕາມການເຄື່ອນໄຫວຂອງສະມາຊິກໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມລະບຽບການ ແລະ ກົດໝາຍ;
6. ໄກ່ເກ່ຍຂໍ້ຂັດແຍ່ງທີ່ເກີດຂຶ້ນລະຫວ່າງສະມາຊິກດ້ວຍກັນ;
7. ສະເໜີຍ້ອງຍໍສະມາຊິກທີ່ມີຜົນງານດີເດັ່ນໃນການເຄື່ອນໄຫວທຸລະກິດ, ປະກອບສ່ວນພັດທະນາ ແລະ ຊ່ວຍເຫຼືອສັງຄົມ;
8. ສັງລວມ ແລະ ລາຍງານຜົນປະກອບການຂອງທຸລະກິດປະຈຳປີ ຕໍ່ອົງການຄຸ້ມຄອງວຽກງານການຄ້າທາງເອເລັກໂຕຣນິກ;
9. ນຳໃຊ້ສິດ ແລະ ໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນລະບຽບການ ແລະ ກົດໝາຍ.

# ພາກທີ VII

# ສິດ ແລະ ພັນທະ ຂອງຜູ້ດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ

## ໝວດທີ 1

## ສິດ ແລະ ພັນທະ ຂອງຜູ້ຄ້າຜ່ານຊ່ອງທາງເອເລັກໂຕຣນິກຂອງຕົນ

**ມາດຕາ 43 ສິດ ຂອງຜູ້ຄ້າຜ່ານຊ່ອງທາງເອເລັກໂຕຣນິກຂອງຕົນ**

ຜູ້ຄ້າຜ່ານຊ່ອງທາງເອເລັກໂຕຣນິກຂອງຕົນ ມີສິດ ດັ່ງນີ້:

1. ດຳເນີນທຸລະກິດການຄ້າຜ່ານຊ່ອງທາງເອເລັກໂຕຣນິກຂອງຕົນ;
2. ໄດ້ຮັບຂໍ້ມູນຂ່າວສານທີ່ຈຳເປັນໃນການດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ;
3. ນຳໃຊ້ສິດອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບການ ແລະ ກົດໝາຍ.

**ມາດຕາ 44 ພັນທະ ຂອງຜູ້ຄ້າຜ່ານຊ່ອງທາງເອເລັກໂຕຣນິກຂອງຕົນ**

ຜູ້ຄ້າຜ່ານຊ່ອງທາງເອເລັກໂຕຣນິກຂອງຕົນ ມີພັນທະ ດັ່ງນີ້:

1. ແຈ້ງດຳເນີນທຸລະກິດ ນຳຂະແໜງການອຸດສາຫະກຳ ແລະ ການຄ້າ ກ່ອນມີການດຳເນີນທຸລະກິດການຄ້າຜ່ານຊ່ອງທາງການຄ້າເອເລັກໂຕຣນິກຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນ ພາກທີ III ຂອງດຳລັດສະບັບນີ້;
2. ຊຳລະຄ່າທຳນຽມ ແລະ ຄ່າບໍລິການຢັ້ງຢືນການແຈ້ງ ຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ;
3. ສະໜອງຂໍ້ມູນ ໃຫ້ຄົບຖ້ວນ ຕາມຂໍ້ກຳນົດໃນມາດຕາ 39 ຂອງດຳລັດສະບັບນີ້;
4. ປະຕິບັດຕາມຂໍ້ກຳນົດວ່າດ້ວຍການປົກປ້ອງຂໍ້ມູນ ຕາມມາດຕາ 40 ຂອງດຳລັດສະບັບນີ້;
5. ມີຄວາມຮັບຜິດຊອບທາງດ້ານກົດໝາຍ ຕໍ່ກັບສິນຄ້າ ຫຼື ການບໍລິການ ທີ່ນຳມາຂາຍ, ແລກປ່ຽນ, ຫຼື ສະໜອງການບໍລິການ ໃນຊ່ອງທາງການຄ້າທາງເອເລັກໂຕຣນິກຂອງຕົນ ຈົນກວ່າຈະມີການກຳນົດຢ່າງອື່ນ;
6. ຖ້າຫາກນຳໃຊ້ ລະບົບຄຳສັ່ງຊື້ທາງເອເລັກໂຕຣນິກ ຕ້ອງປະຕິບັດໃຫ້ສອດຄ່ອງກັບຂໍ້ກຳນົດໃນ ໝວດທີ 2 ພາກທີ IV ຂອງດຳລັດສະບັບນີ້;
7. ມີກົນໄກ ໃຫ້ລູກຄ້າສາມາດ ຕິຊົມຕໍ່ກັບສິນຄ້າ ຫຼື ການບໍລິການສິນຄ້າ ຫຼື ການບໍລິການ ແລະ ເປີດເຜີຍຄຳຕິຊົມດັ່ງກ່າວ ຢູ່ໃນຊ່ອງທາງການຄ້າເອເລັກໂຕຣນິກຂອງຕົນ ພ້ອມທັງມີກົນໄກ ໃຫ້ລູກຄ້າສາມາດ ກວດກາ, ດັດແກ້ ຫຼື ລຶບລ້າງຄຳເຫັນຂອງຕົນໄດ້ທຸກເວລາ;
8. ສະໜອງຂໍ້ມູນການດຳເນີນທຸລະກິດ ແລະ ໃຫ້ການຮ່ວມມືກັບອົງການຄຸ້ມຄອງການຄ້າທາງເອເລັກໂຕຣນິກ ກ່ຽວກັບວຽກງານການຄ້າທາງເອເລັກໂຕຣນິກ;
9. ຖ້ານຳໃຊ້ຊ່ອງທາງການຊຳລະຜ່ານທາງເອເລັກໂຕຣນິກ ເພື່ອໃຫ້ບໍລິການແກ່ລູກຄ້າ ໃນການຊຳລະສິນຄ້າ ຫຼື ການບໍລິການ, ຕ້ອງນຳໃຊ້ບໍລິການຂອງຜູ້ໃຫ້ບໍລິການຊຳລະ ທີ່ໄດ້ຮັບອະນຸຍາດ ຈາກທະນາຄານ ແຫ່ງ ສປປ ລາວ;
10. ປະຕິບັດພັນທະອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບການ ແລະ ກົດໝາຍ.

## ໝວດທີ 2

## ສິດ ແລະ ພັນທະ ຂອງຜູ້ໃຫ້ບໍລິການຕະຫຼາດ ທາງເອເລັກໂຕຣນິກ

### ມາດຕາ 45 ສິດ ຂອງຜູ້ໃຫ້ບໍລິການຕະຫຼາດ ທາງເອເລັກໂຕຣນິກ

ຜູ້ໃຫ້ບໍລິການຕະຫຼາດ ທາງເອເລັກໂຕຣນິກ ມີສິດ ດັ່ງນີ້:

1. ໃຫ້ບໍລິການຕະຫຼາດ ທາງເອເລັກໂຕຣນິກ ຕາມຂອບເຂດທີ່ໄດ້ຮັບອະນຸຍາດ;
2. ໄດ້ຮັບຂໍ້ມູນຂ່າວສານທີ່ຈຳເປັນໃນການດຳເນີນທຸລະກິດໃຫ້ບໍລິການຕະຫຼາດ ທາງເອເລັກໂຕຣນິກ;
3. ນຳໃຊ້ສິດອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບການ ແລະ ກົດໝາຍ.

### ມາດຕາ 46 ພັນທະ ຂອງຜູ້ໃຫ້ບໍລິການຕະຫຼາດ ທາງເອເລັກໂຕຣນິກ

ຜູ້ຄ້າທາງເອເລັກໂຕຣນິກ ມີພັນທະ ຄືດັ່ງນີ້:

1. ຂໍອະນຸຍາດດຳເນີນທຸລະກິດໃຫ້ບໍລິການຕະຫຼາດ ທາງເອເລັກໂຕຣນິກ ຕາມທີ່ກຳນົດໄວ້ໃນ ພາກທີ III ຂອງດຳລັດສະບັບນີ້;
2. ຊຳລະຄ່າທຳນຽມ ແລະ ຄ່າບໍລິການອອກໃບອະນຸຍາດດຳເນີນທຸລະກິດ ຕາມລະບຽບການ ແລະ ກົດໝາຍ ທີ່ກ່ຽວຂ້ອງ;

3. ສະແດງຂໍ້ມູນ ໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດ ໄວ້ໃນໜ້າຫຼັກຂອງຊ່ອງທາງການຄ້າທາງເອເລັກໂຕຣນິກ ຕາມຂໍ້ 2 ວັກ 2 ຂອງມາດຕາ 39;
4. ກຳນົດ ແລະ ສະແດງເງື່ອນໄຂຂອງການບໍລິການຕະຫຼາດ ທາງເອເລັກໂຕຣນິກ ຊຶ່ງຕ້ອງປະກອບມີຂໍ້ມູນພື້ນຖານດັ່ງນີ້: ສິດ ແລະ ພັນທະ ຂອງຜູ້ໃຫ້ບໍລິການຕະຫຼາດ ທາງເອເລັກໂຕຣນິກ, ຂອງຜູ້ຄ້າ, ແລະ ລູກຄ້າ, ຂັ້ນຕອນການດຳເນີນທຸລະກຳແຕ່ລະປະເພດ, ກົນໄກແກ້ໄຂຂໍ້ຂັດແຍ່ງ, ການເກັບກຳ ແລະ ການຄຸ້ມຄອງຂໍ້ມູນ.
5. ເກັບກຳ ຂໍ້ມູນ ຂອງຜູ້ຄ້າ ໃນຕະຫຼາດ ທາງເອເລັກໂຕຣນິກ ຕາມຂໍ້ 2 ວັກ 2 ຂອງມາດຕາ 39;
6. ມີກົນໄກໃຫ້ຜູ້ຄ້າ ສາມາດນຳສະເໜີຂໍ້ມູນກ່ຽວກັບສິນຄ້າ ຫຼື ການບໍລິການ ຂອງຕົນຕາມມາດຕາ 39 ພ້ອມທັງກົນໄກກວດສອບ ແລະ ຕິດຕາມກວດກາ ເພື່ອຮັບປະກັນຄວາມຄົບຖ້ວນ ແລະ ຖືກຕ້ອງຂອງຂໍ້ມູນ ທີ່ສະແດງໂດຍຜູ້ຄ້າ;
7. ມີກົນໄກ ໃຫ້ລູກຄ້າສາມາດຕິຊົມຕໍ່ກັບສິນຄ້າ ຫຼື ການບໍລິການ ແລະ ເປີດເຜີຍຄຳຕິຊົມດັ່ງກ່າວ ຢູ່ໃນຊ່ອງ ທາງເອເລັກໂຕຣນິກຂອງຕົນ ພ້ອມທັງມີກົນໄກ ໃຫ້ລູກຄ້າສາມາດກວດກາ, ດັດແກ້ ຫຼື ລຶບລ້າງຄຳເຫັນຂອງຕົນໄດ້;
8. ສ້າງກົນໄກໃຫ້ຜູ້ຄ້າ ແລະ ລູກຄ້າ ສາມາດດຳເນີນການສ້າງສັນຍາການຄ້າທາງເອເລັກໂຕຣນິກ ຕາມທີ່ກຳນົດໄວ້ໃນ ໝວດທີ 2, ພາກທີ IV ຂອງດຳລັດສະບັບນີ້;
9. ປະຕິບັດຕາມຂໍ້ກຳນົດວ່າດ້ວຍການປົກປ້ອງຂໍ້ມູນການຄ້າທາງເອເລັກໂຕຣນິກ ຕາມທີ່ກຳນົດໃນ ມາດຕາ 40 ຂອງດຳລັດສະບັບນີ້;
10. ມີມາດຕະການແກ້ໄຂທີ່ເໝາະສົມ ແລະ ທັນເວລາ ໃນກໍລະນີເກີດມີຂໍ້ຂັດແຍ່ງ ຫຼື ການກະທຳທີ່ລະເມີດກົດໝາຍ ຢູ່ໃນຕະຫຼາດ ທາງເອເລັກໂຕຣນິກຂອງຕົນ;
11. ສະໜອງຂໍ້ມູນການດຳເນີນທຸລະກິດ ແລະ ໃຫ້ການຮ່ວມມືກັບອົງການຄຸ້ມຄອງການຄ້າທາງເອເລັກໂຕຣນິກ ກ່ຽວກັບວຽກງານການຄ້າທາງເອເລັກໂຕຣນິກ;
12. ນຳໃຊ້ຊ່ອງທາງການຊຳລະຜ່ານທາງເອເລັກໂຕຣນິກ ຈາກຜູ້ໃຫ້ບໍລິການຊຳລະ ທີ່ໄດ້ຮັບອະນຸຍາດ ໂດຍທະນາຄານ ແຫ່ງ ສປປ ລາວ;
13. ນຳໃຊ້ບໍລິການຈັດສົ່ງສິນຄ້າ ຈາກຜູ້ໃຫ້ບໍລິການທີ່ໄດ້ຮັບອະນຸຍາດຕາມກົດໝາຍ;
14. ປະຕິບັດພັນທະອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບການ ແລະ ກົດໝາຍ.

## ໝວດທີ 3
## ສິດ ແລະ ພັນທະ ຂອງຜູ້ຄ້າໃນຕະຫຼາດ ທາງເອເລັກໂຕຣນິກ

**ມາດຕາ 47 ສິດ ຂອງຜູ້ຄ້າໃນຕະຫຼາດ ທາງເອເລັກໂຕຣນິກ**

ຜູ້ຄ້າໃນຕະຫຼາດ ທາງເອເລັກໂຕຣນິກ ມີສິດ ດັ່ງນີ້:

1. ດຳເນີນທຸລະກິດການຄ້າໃນຕະຫຼາດ ທາງເອເລັກໂຕຣນິກ ຕາມຂອບເຂດທີ່ໄດ້ຮັບອະນຸຍາດ;
2. ໄດ້ຮັບຂໍ້ມູນຂ່າວສານທີ່ຈຳເປັນໃນການດຳເນີນທຸລະກິດ ໃນຕະຫຼາດ ທາງເອເລັກໂຕຣນິກ;
3. ນຳໃຊ້ສິດອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 48 ພັນທະ ຂອງຜູ້ຄ້າໃນຕະຫຼາດ ທາງເອເລັກໂຕຣນິກ**

ຜູ້ຄ້າໃນຕະຫຼາດ ທາງເອເລັກໂຕຣນິກ ມີພັນທະ ດັ່ງນີ້:

1. ແຈ້ງການດຳເນີນທຸລະກິດ ນຳຂະແໜງການອຸດສາຫະກຳ ແລະ ການຄ້າ ກ່ອນມີການດຳເນີນທຸລະກິດການຄ້າຜ່ານຊ່ອງທາງການຄ້າເອເລັກໂຕຣນິກຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນ ພາກທີ III ຂອງດຳລັດສະບັບນີ້;
2. ຊຳລະຄ່າທຳນຽມ ແລະ ຄ່າບໍລິການຢັ້ງຢືນການແຈ້ງ ຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ;
3. ມີຄວາມຮັບຜິດຊອບທາງດ້ານກົດໝາຍ ຕໍ່ກັບສິນຄ້າ ຫຼື ການບໍລິການ ທີ່ນຳມາຂາຍແລກປ່ຽນ ຫຼື ສະໜອງການບໍລິການ ຈົນກວ່າຈະມີການກຳນົດຢ່າງອື່ນ;
4. ສະໜອງຂໍ້ມູນກ່ຽວກັບການແຈ້ງການເຄື່ອນໄຫວທຸລະກິດ ຕໍ່ຜູ້ໃຫ້ບໍລິການຕະຫຼາດທາງເອເລັກໂຕຣນິກ ຕາມຂໍ້ 2 ວັກ 2 ຂອງມາດຕາ 39 ຂອງດຳລັດສະບັບນີ້;
5. ສະໜອງຂໍ້ມູນກ່ຽວກັບສິນຄ້າ ຫຼື ການບໍລິການ ຢ່າງຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 40 ຂອງດຳລັດສະບັບນີ້;
6. ສະໜອງຂໍ້ມູນການດຳເນີນທຸລະກິດ ແລະ ໃຫ້ການຮ່ວມມືກັບອົງການຄຸ້ມຄອງການຄ້າທາງເອເລັກໂຕຣນິກ ກ່ຽວກັບວຽກງານການຄ້າທາງເອເລັກໂຕຣນິກ;
7. ປະຕິບັດພັນທະອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ພາກທີ VIII
## ຂໍ້ຫ້າມ

### ມາດຕາ 49 ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ ຫຼື ນິຕິບຸກຄົນ ມີພຶດຕິກຳ ດັ່ງນີ້:

1. ສ້າງອຸປະສັກກີດຂວາງການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ລັດທີ່ກ່ຽວຂ້ອງ ໃນການປະຕິບັດວຽກງານຄຸ້ມຄອງການຄ້າທາງເອເລັກໂຕຣນິກ;
2. ໃຫ້ການຊ່ວຍເຫຼືອ, ປົກປ້ອງຜູ້ລະເມີດ;
3. ເປັນສື່ກາງໃນການໃຫ້ ແລະ ຮັບສິນບົນ;
4. ພຶດຕິກຳອື່ນ ທີ່ເປັນການລະເມີດຕໍ່ລະບຽບກົດໝາຍ.

### ມາດຕາ 50 ຂໍ້ຫ້າມສຳລັບບຸກຄົນ ຫຼື ນິຕິບຸກຄົນ ທີ່ດຳເນີນການຄ້າທາງເອເລັກໂຕຣນິກ

ກ. ຜູ້ຄ້າຜ່ານຊ່ອງທາງເອເລັກໂຕຣນິກຂອງຕົນເອງ ຫ້າມມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດ ໂດຍບໍ່ແຈ້ງດຳເນີນທຸລະກິດ ຕາມກຳນົດໄວ້ໃນດຳລັດສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ດຳເນີນທຸລະກິດ ທີ່ບໍ່ສອດຄ່ອງກັບຂອບເຂດທີ່ໄດ້ແຈ້ງ;
3. ດຳເນີນທຸລະກິດຄ້າຂາຍ ສິນຄ້າ ຫຼື ການບໍລິການ ທີ່ນອນຢູ່ໃນບັນຊີຄວບຄຸມ ໂດຍບໍ່ໄດ້ຮັບອະນຸຍາດ;
4. ດຳເນີນການລະດົມທຶນຜ່ານຊ່ອງທາງການຄ້າທາງເອເລັກໂຕຣນິກ ໂດຍບໍ່ໄດ້ຮັບອະນຸຍາດ;
5. ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ໃນຂັ້ນຕອນແຈ້ງດຳເນີນທຸລະກິດ;
6. ສະໜອງຂໍ້ມູນກ່ຽວກັບສິນຄ້າ ຫຼື ການບໍລິການ ຢ່າງບໍ່ສອດຄ່ອງກັບສິນຄ້າ ຫຼື ການບໍລິການຕົວຈິງ;
7. ເກັບກຳ, ນຳໃຊ້ ຫຼື ເຜີຍແຜ່ ຂໍ້ມູນຂອງ ລູກຄ້າໂດຍບໍ່ໄດ້ຮັບອະນຸຍາດ;
8. ມີພຶດຕິກຳອື່ນທີ່ເປັນການລະເມີດລະບຽບການ ແລະ ກົດໝາຍ.

ຂ. ຜູ້ໃຫ້ບໍລິການຕະຫຼາດ ທາງເອເລັກໂຕຣນິກ ຫ້າມມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດ ໂດຍບໍ່ໄດ້ຮັບອະນຸຍາດ ຕາມລະບຽບການ;
2. ດຳເນີນທຸລະກິດ ທີ່ບໍ່ສອດຄ່ອງກັບຂອບເຂດທີ່ກຳນົດໄວ້ໃນໃບອະນຸຍາດດຳເນີນທຸລະກິດ;
3. ອະນຸຍາດ ຫຼື ເມີນເສີຍ ໃຫ້ມີການຄ້າຂາຍ ສິນຄ້າ ຫຼື ການບໍລິການ ທີ່ນອນຢູ່ໃນບັນຊີຄວມຄຸມ ຫຼື ຕ້ອງຫ້າມ ຕາມທີ່ລະບຸໃນລະບຽບການ ໃນຕະຫຼາດເອເລັກໂຕຣນິກຂອງຕົນ;
4. ດຳເນີນການລະດົມທຶນຜ່ານຊອງທາງການຄ້າທາງເອເລັກໂຕຣນິກ ໂດຍບໍ່ໄດ້ຮັບອະນຸຍາດ;
5. ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ໃນຂັ້ນຕອນການຂໍອະນຸຍາດດຳເນີນທຸລະກິດ;
6. ເກັບກຳ, ນຳໃຊ້ ຫຼື ເຜີຍແຜ່ ຂໍ້ມູນຂອງ ລູກຄ້າໂດຍບໍ່ໄດ້ຮັບອະນຸຍາດ;
7. ມີພຶດຕິກຳອື່ນທີ່ເປັນ ການລະເມີດລະບຽບການ ແລະ ກົດໝາຍ.

ຄ. ຜູ້ຄ້າໃນຕະຫຼາດ ທາງເອເລັກໂຕຣນິກ ຫ້າມມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດ ໂດຍບໍ່ໄດ້ແຈ້ງດຳເນີນທຸລະກິດ ຕາມກຳນົດໄວ້ໃນດຳລັດສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ດຳເນີນທຸລະກິດ ທີ່ບໍ່ສອດຄ່ອງກັບຂອບເຂດທີ່ກຳນົດໄວ້ໃນໃບອະນຸຍາດດຳເນີນທຸລະກິດ;
3. ດຳເນີນທຸລະກິດຄ້າຂາຍ ສິນຄ້າ ຫຼື ການບໍລິການ ທີ່ນອນຢູ່ໃນບັນຊີຄວມຄຸມ ໂດຍບໍ່ໄດ້ຮັບອະນຸຍາດ;
4. ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ໃນຂັ້ນຕອນການຂໍອະນຸຍາດດຳເນີນທຸລະກິດ;
5. ສະໜອງຂໍ້ມູນກ່ຽວກັບສິນຄ້າ ຫຼື ການບໍລິການ ຢ່າງບໍ່ສອດຄ່ອງກັບສິນຄ້າ ຫຼື ການບໍລິການຕົວຈິງ;
6. ມີພຶດຕິກຳອື່ນທີ່ເປັນການລະເມີດລະບຽບການ ແລະ ກົດໝາຍ.

**ມາດຕາ 51 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ແລະ ພະນັກງານ**

ຫ້າມເຈົ້າໜ້າທີ່ ແລະ ພະນັກງານ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ອຳນາດ, ຕຳແໜ່ງ ຫຼື ໜ້າທີ່ ເພື່ອຮຽກຮ້ອງເອົາຜົນປະໂຫຍດ;
2. ບັງຄັບ, ນາບຂູ່ ຫຼື ໃຊ້ຄວາມຮຸນແຮງຕໍ່ຜູ້ດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ;
3. ກົດໜ່ວງຖ່ວງດຶງ ຫຼື ແກ່ຍາວເວລາໃນການພິຈາລະນາເອກະສານ;
4. ປະລະໜ້າທີ່, ຂາດຄວາມຮັບຜິດຊອບ ຫຼື ບິດເບືອນຄວາມຈິງ;
5. ປິດບັງ, ປົກປ້ອງ ຫຼື ໃຫ້ຄວາມຮ່ວມມືແກ່ຜູ້ກະທຳຄວາມຜິດ;
6. ປອມແປງເອກະສານ ຫຼື ໃຊ້ເອກະສານປອມແປງ, ເປີດເຜີຍຄວາມລັບທຸລະກິດໂດຍບໍ່ໄດ້ຮັບ ອະນຸຍາດຈາກຜູ້ດຳເນີນທຸລະກິດທີ່ກ່ຽວຂ້ອງ;
7. ອະນຸຍາດດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ໂດຍບໍ່ຖືກຕ້ອງຕາມເງື່ອນໄຂ ແລະ ຂັ້ນຕອນ;

8. ມີພຶດຕິກຳອື່ນທີ່ເປັນການລະເມີດລະບຽບການ ແລະ ກົດໝາຍ.

## ພາກທີ IX
## ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 52 ວິທີການແກ້ໄຂຂໍ້ຂັດແຍ່ງ**

ເມື່ອເກີດມີຂໍ້ຂັດແຍ່ງ ກ່ຽວກັບ ການດຳເນີນທຸລະກຳການຄ້າທາງເອເລັກໂຕຣນິກ ຄູ່ກໍລະນີ ສາມາດແກ້ໄຂ ດ້ວຍວິທີຕ່າງໆ ດັ່ງນີ້:

1. ການແກ້ໄຂຂໍ້ຂັດແຍ່ງດ້ວຍການປະນີປະນອມ;
2. ການແກ້ໄຂຂໍ້ຂັດແຍ່ງໂດຍອົງການຄຸ້ມຄອງວຽກງານການຄ້າທາງເອເລັກໂຕຣນິກ;
3. ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການແກ້ໄຂໂດຍສານປະຊາຊົນ;
5. ການແກ້ໄຂຂໍ້ຂັດແຍ່ງສາກົນ.

**ມາດຕາ 53 ການແກ້ໄຂຂໍ້ຂັດແຍ່ງ ໂດຍການປະນີປະນອມ**

ໃນກໍລະນີມີຂໍ້ຂັດແຍ່ງ ກ່ຽວກັບ ການດຳເນີນທຸລະກຳການຄ້າທາງເອເລັກໂຕຣນິກ ຄູ່ກໍລະນີສາມາດແກ້ໄຂຂໍ້ຂັດແຍ່ງດັ່ງກ່າວ ດ້ວຍການປຶກສາຫາລື ແລະ ປະນີປະນອມກັນ ເພື່ອໃຫ້ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ໂດຍປະຕິບັດຕາມຂັ້ນຕອນ ກຳນົດໄວ້ໃນລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 54 ການແກ້ໄຂຂໍ້ຂັດແຍ່ງໂດຍອົງການຄຸ້ມຄອງວຽກງານການຄ້າທາງເອເລັກໂຕຣນິກ**

ໃນກໍລະນີມີຂໍ້ຂັດແຍ່ງກ່ຽວກັບທຸລະກຳການຄ້າທາງເອເລັກໂຕຣນິກ ທີ່ມີລັກສະນະທາງດ້ານບໍລິຫານ ຊຶ່ງຢູ່ພາຍໃຕ້ຄວາມຮັບຜິດຊອບຂອງອົງການຄຸ້ມຄອງວຽກງານການຄ້າທາງເອເລັກໂຕຣນິກ ຄູ່ກໍລະນີມີສິດສະເໜີຕໍ່ອົງການຈັດຕັ້ງດັ່ງກ່າວເພື່ອແກ້ໄຂ.

ຂັ້ນຕອນ ແລະ ຫຼັກການ ໃນການແກ້ໄຂຂໍ້ຂັດແຍ່ງ ໂດຍອົງການຄຸ້ມຄອງວຽກງານການຄ້າທາງເອເລັກໂຕຣນິກ ແມ່ນ ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 55 ການແກ້ໄຂຂໍ້ຂັດແຍ່ງ ໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ໃນກໍລະນີມີຂໍ້ຂັດແຍ່ງກ່ຽວກັບທຸລະກຳການຄ້າທາງເອເລັກໂຕຣນິກ ຄູ່ກໍລະນີມີສິດສະເໜີຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອແກ້ໄຂຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

**ມາດຕາ 56 ການແກ້ໄຂຂໍ້ຂັດແຍ່ງ ໂດຍສານປະຊາຊົນ**

ໃນກໍລະນີມີຂໍ້ຂັດແຍ່ງກ່ຽວກັບທຸລະກຳການຄ້າທາງເອເລັກໂຕຣນິກ ຄູ່ກໍລະນີສາມາດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາຕັດສິນຕາມກົດໝາຍ.

**ມາດຕາ 57 ການແກ້ໄຂຂໍ້ຂັດແຍ່ງສາກົນ**

ໃນກໍລະນີມີຂໍ້ຂັດແຍ່ງກ່ຽວກັບທຸລະກຳການຄ້າທາງເອເລັກໂຕຣນິກ ທີ່ມີລັກສະນະສາກົນ ໃຫ້ປະຕິບັດຕາມສົນທິສັນຍາສາກົນ ແລະ ສົນທິສັນຍາທີ່ ສປປ ລາວ ເປັນພາຄີ.

# ພາກທີ X
# ການຄຸ້ມຄອງ

## ມາດຕາ 58 ອົງການຄຸ້ມຄອງວຽກງານການຄ້າທາງເອເລັກໂຕຣນິກ

ກະຊວງອຸດສາຫະກຳ ແລະ ການຄ້າ ຮັບຜິດຊອບໂດຍກົງ ແລະ ເປັນໃຈກາງປະສານສົມທົບກັບກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ, ກະຊວງການເງິນ, ທະນາຄານ ແຫ່ງ ສປປ ລາວ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ, ແລະ ກະຊວງ, ອົງການທຽບເທົ່າ, ອົງການປົກຄອງທ້ອງຖິ່ນອື່ນໆ ທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດວຽກງານການຄ້າທາງເອເລັກໂຕຣນິກ.

## ມາດຕາ 59 ສິດ ແລະ ໜ້າທີ່ ຂອງກະຊວງອຸດສາຫະກຳ ແລະ ການຄ້າ

ໃນການຄຸ້ມຄອງວຽກງານການຄ້າທາງເອເລັກໂຕຣນິກ, ກະຊວງອຸດສາຫະກຳ ແລະ ການຄ້າ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງນະໂຍບາຍ, ແຜນຍຸດທະສາດ, ແຜນພັດທະນາ, ນິຕິກຳ ແລະ ມາດຕະການ ກ່ຽວກັບວຽກງານການຄ້າທາງເອເລັກໂຕຣນິກ ເພື່ອນຳສະເໜີລັດຖະບານພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ແຜນພັດທະນາ, ນິຕິກຳ ແລະ ມາດຕະການ ກ່ຽວກັບວຽກງານການຄ້າທາງເອເລັກໂຕຣນິກ ແລະ ຈັດຕັ້ງປະຕິບັດ;
3. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ແຜນພັດທະນາ, ນິຕິກຳ ແລະ ມາດຕະການກ່ຽວກັບ ວຽກງານການຄ້າທາງເອເລັກໂຕຣນິກ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ແລະ ສັງຄົມຊາບ ຢ່າງທົ່ວເຖິງ;
4. ພິຈາລະນາ ອອກໃບອະນຸຍາດດຳເນີນທຸລະກິດ, ສັ່ງໂຈະ ຫຼື ຢຸດເຊົາ ການດຳເນີນ ທຸລະກິດການຄ້າທາງເອເລັກໂຕຣນິກ;
5. ພັດທະນາ, ປັບປຸງ ແລະ ບຳລຸງຮັກສາ ລະບົບຖານຂໍ້ມູນການຄ້າທາງເອເລັກໂຕຣນິກ;
6. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີ ກ່ຽວກັບຂໍ້ຂັດແຍ່ງດ້ານການຄ້າທາງເອເລັກໂຕຣນິກ;
7. ຊຸກຍູ້ ແລະ ສົ່ງເສີມ ໃຫ້ມີການນຳໃຊ້ການຄ້າທາງເອເລັກໂຕຣນິກ;
8. ຕິດຕາມກວດກາການເຄື່ອນໄຫວ ຂອງສະມາຄົມການຄ້າທາງເອເລັກໂຕຣນິກ ຢ່າງເປັນປົກກະຕິ;
9. ສັງລວມເກັບກຳສະຖິຕິການຄ້າທາງເອເລັກໂຕຣນິກແຫ່ງຊາດ;
10. ເປັນຈຸດປະສານງານ, ຮ່ວມມື ແລະ ເຈລະຈາ ວຽກງານການຄ້າທາງເອເລັກໂຕຣນິກກັບຕ່າງປະເທດ;
11. ປະສານສົມທົບກັບກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດວຽກງານທີ່ກ່ຽວຂ້ອງວຽກງານການຄ້າທາງເອເລັກໂຕຣນິກ;
12. ແບ່ງຄວາມຮັບຜິດຊອບ, ຊີ້ນຳ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານການຄ້າທາງເອເລັກໂຕຣນິກ ຕາມສາຍຕັ້ງຂອງຕົນ ໃນຂອບເຂດທົ່ວປະເທດ;
13. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານການຄ້າທາງເອເລັກໂຕຣນິກໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;
14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ ແລະ ກົດໝາຍ.

**ມາດຕາ 60 ສິດ ແລະ ໜ້າທີ່ ຂອງ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ**

ໃນການຄຸ້ມຄອງວຽກງານການຄ້າທາງເອເລັກໂຕຣນິກ ກະຊວງໄປສະນີ ໂທລະຄົມ ແລະ ການສື່ສານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສົມທົບກັບອົງການຄຸ້ມຄອງ ຄົ້ນຄວ້າ, ສ້າງນະໂຍບາຍ, ແຜນຍຸດທະສາດ, ແຜນພັດທະນາ, ນິຕິກຳ ແລະ ມາດຕະການ ກ່ຽວກັບວຽກງານການຄ້າທາງເອເລັກໂຕຣນິກ ໃນຂອບເຂດພາລະບົດບາດຂອງຕົນ, ເພື່ອນຳສະເໜີລັດຖະບານພິຈາລະນາ;
2. ສົ່ງເສີມ ແລະ ພັດທະນາ ຜະລິດຕະພັນ ໄປສະນີ, ໂທລະຄົມມະນາຄົມ ແລະ ເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ທີ່ທັນສະໄໝ ເອື້ອອຳນວຍແກ່ການຂະຫຍາຍຕົວຂອງການຄ້າທາງເອເລັກໂຕຣນິກ;
3. ປະສານສົມທົບ ກັບອົງການຄຸ້ມຄອງວຽກງານການຄ້າທາງເອເລັກໂຕຣນິກ ສົ່ງເສີມ, ຊຸກຍູ້ ຫົວໜ່ວຍທຸລະກິດ ຫັນໄປນຳໃຊ້ການຄ້າທາງເອເລັກໂຕຣນິກ;
4. ຄົ້ນຄວ້າ, ສ້າງນະໂຍບາຍ, ແຜນຍຸດທະສາດ, ແຜນພັດທະນາ, ນິຕິກຳ ແລະ ມາດຕະການ ຕິດພັນກັບການປົກປ້ອງຂໍ້ມູນເອເລັກໂຕຣນິກ ແລະ ການປ້ອງກັນອາສະຍາກຳທາງລະບົບຄອມພິວເຕີ ເພື່ອຮັບປະກັບສະພາບແວດລ້ອມທີ່ປອດໄພ ແກ່ການດຳເນີນທຸລະກຳການຄ້າທາງເອເລັກໂຕຣນິກ;
5. ປະສານສົມທົບກັບອົງການຄຸ້ມຄອງ ໃນການພິຈາລະນາແກ້ໄຂ ຂໍ້ຂັດແຍ່ງດ້ານການຄ້າທາງເອເລັກໂຕຣນິກ;
6. ປະສານສົມທົບກັບອົງການຄຸ້ມຄອງ ໃນການສັງລວມເກັບກຳສະຖິຕິການຄ້າທາງເອເລັກໂຕຣນິກແຫ່ງຊາດ;
7. ປະສານສົມທົບກັບ ອົງການຄຸ້ມຄອງ ໃນການວຽກງານຮ່ວມມື ແລະ ເຈລະຈາໃນຂອບການຄ້າທາງເອເລັກໂຕຣນິກ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ ແລະ ກົດໝາຍ.

**ມາດຕາ 61 ສິດ ແລະ ໜ້າທີ່ ຂອງ ທະນາຄານ ແຫ່ງ ສປປ ລາວ**

ໃນການດຳເນີນວຽກງານການຄ້າທາງເອເລັກໂຕຣນິກ, ທະນາຄານ ແຫ່ງ ສປປ ລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສົມທົບກັບອົງການຄຸ້ມຄອງ ຄົ້ນຄວ້າ, ສ້າງນະໂຍບາຍ, ແຜນຍຸດທະສາດ, ແຜນພັດທະນາ, ນິຕິກຳ ແລະ ມາດຕະການ ກ່ຽວກັບວຽກງານການຄ້າທາງເອເລັກໂຕຣນິກ ໃນຂອບເຂດພາລະບົດບາດຂອງຕົນ, ເພື່ອນຳສະເໜີລັດຖະບານພິຈາລະນາ;
2. ສົ່ງເສີມ ແລະ ພັດທະນາ ຜະລິດຕະພັນ ດ້ານການຊຳລະ ແລະ ການເງິນ ທີ່ທັນສະໄໝ ເອື້ອອຳນວຍແກ່ການຂະຫຍາຍຕົວຂອງການຄ້າທາງເອເລັກໂຕຣນິກ;
3. ປະສານສົມທົບກັບອົງການຄຸ້ມຄອງ ໃນວຽກງານຮ່ວມມື ແລະ ເຈລະຈາໃນຂອບການຄ້າທາງເອເລັກໂຕຣນິກ;
4. ປະສານສົມທົບກັບອົງການຄຸ້ມຄອງ ໃນການພິຈາລະນາແກ້ໄຂຂໍ້ຂັດແຍ່ງດ້ານການຄ້າທາງເອເລັກໂຕຣນິກ;
5. ປະສານສົມທົບກັບອົງການຄຸ້ມຄອງ ໃນການສັງລວມເກັບກຳສະຖິຕິການຄ້າທາງເອເລັກໂຕຣນິກແຫ່ງຊາດ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ ແລະ ກົດໝາຍ.

**ມາດຕາ 62 ສິດ ແລະ ໜ້າທີ່ ຂອງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ**

ໃນວຽກງານການຄ້າທາງເອເລັກໂຕຣນິກ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສົມທົບກັບອົງການຄຸ້ມຄອງ ຄົ້ນຄວ້າ, ສ້າງນະໂຍບາຍ, ແຜນຍຸດທະສາດ, ແຜນພັດທະນາ, ນິຕິກຳ ແລະ ມາດຕະການ ກ່ຽວກັບວຽກງານການຄ້າທາງເອເລັກໂຕຣນິກ ໃນຂອບເຂດພາລະບົດບາດຂອງຕົນ, ເພື່ອນຳສະເໜີລັດຖະບານພິຈາລະນາ;
2. ຄົ້ນຄວ້າ, ກວດສອບ, ຢັ້ງຢືນ ສັນຍາທາງເອເລັກໂຕຣນິກ, ຂໍ້ຄວາມທີ່ເປັນຂໍ້ມູນ ຫຼື/ ແລະ ເອກະສານທາງເອເລັກໂຕຣນິກ ເພື່ອປະກອບເປັນຫຼັກຖານໃນການດຳເນີນຄະດີ ຕາມກົດໝາຍວ່າດ້ວຍທຸລະກຳທາງເອເລັກໂຕຣນິກ;
3. ຄົ້ນຄວ້າ, ກວດຄົ້ນ, ກວດສອບ ແລະ ຢັ້ງຢືນກ່ຽວກັບຊັບສິນທາງປັນຍາ ເຊັ່ນ: ເຄື່ອງໝາຍການຄ້າ, ຊື່ການຄ້າ, ສິດທິບັດ, ອະນຸສິດທິບັດ, ລິຂະສິດ ແລະ ສິດທີ່ກ່ຽວຂ້ອງ;
4. ຄົ້ນຄວ້າ, ກວດສອບ, ທົດສອບ ແລະ ຮັບຮອງດ້ານເຕັກນິກໃຫ້ແກ່ຕະຫຼາດທາງເອເລັກໂຕຣນິກ;
5. ຄົ້ນຄວ້າ ແລະ ພັດທະນາ ຜະລິດຕະພັນ ດ້ານເຕັກໂນໂລຊີດີຈິຕ໋ອນ ແລະ ນະວັດຕະກຳທີ່ທັນສະໄໝ ເພື່ອສົ່ງເສີມການນຳໃຊ້ການຄ້າທາງເອເລັກໂຕຣນິກ;
6. ໂຄສະນາ, ເຜີຍແຜ່, ສະໜອງຂໍ້ມູນກ່ຽວກັບສິນຄ້າ ແລະ ການບໍລິການທີ່ຖືກຕ້ອງຕາມຄວາມຈິງ;
7. ຊຸກຍູ້, ສົ່ງເສີມ ໃຫ້ມີການນຳໃຊ້ການຄ້າທາງເອເລັກໂຕຣນິກຢ່າງກວ້າງຂວາງ;
8. ປະສານສົມທົບກັບອົງການຄຸ້ມຄອງ ໃນການພິຈາລະນາແກ້ໄຂຂໍ້ຂັດແຍ່ງດ້ານການຄ້າທາງເອເລັກໂຕຣນິກ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ ແລະ ກົດໝາຍ.

**ມາດຕາ 63 ສິດ ແລະ ໜ້າທີ່ ຂອງກະຊວງການເງິນ**

ໃນການດຳເນີນວຽກງານການຄ້າທາງເອເລັກໂຕຣນິກ, ກະຊວງການເງິນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສົມທົບກັບອົງການຄຸ້ມຄອງ ຄົ້ນຄວ້າ, ສ້າງນະໂຍບາຍ, ແຜນຍຸດທະສາດ, ແຜນພັດທະນາ, ນິຕິກຳ ແລະ ມາດຕະການ ກ່ຽວກັບວຽກງານການຄ້າທາງເອເລັກໂຕຣນິກ ໃນຂອບເຂດພາລະບົດບາດຂອງຕົນ, ເພື່ອນຳສະເໜີລັດຖະບານພິຈາລະນາ;
2. ປະສານກັບອົງການຄຸ້ມຄອງ ເພື່ອພັດທະນາກົນໄກ ແລະ ວິທີການ ການຈັດຕັ້ງປະຕິບັດວຽກງານເກັບລາຍຮັບຈາກ ທຸລະກິດການຄ້າທາງເອເລັກໂຕຣນິກ;
3. ເກັບກຳ ແລະ ລາຍງານຂໍ້ມູນການຄຸ້ມຄອງການເກັບພັນທະຕົວຈິງໃນແຕ່ລະໄລຍະ ໃຫ້ອົງການຄຸ້ມຄອງ ຮັບຮູ້ຢ່າງເປັນທາງການໃນແຕ່ລະໄລຍະ;
4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ ແລະ ກົດໝາຍ.

**ມາດຕາ 64 ສິດ ແລະ ໜ້າທີ່ ຂອງກະຊວງ, ຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ**

ກະຊວງ, ຂະແໜງການກ່ຽວຂ້ອງ, ແລະ ອົງການປົກຄອງທ້ອງຖິ່ນ ມີ ສິດ ແລະ ໜ້າທີ່ ໃນການສົ່ງເສີມ, ສະໜັບສະໜູນ, ຄຸ້ມຄອງ, ຕິດຕາມ ແລະ ກວດກາວຽກງານການຄ້າທາງເອເລັກໂຕຣນິກ ໂດຍປະສານສົມທົບກະຊວງອຸດສາຫະກຳ ແລະ ການຄ້າ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ.

# ພາກທີ XI
# ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 65 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ຮັບນະໂຍບາຍຕາມລະບຽບການ ແລະ ກົດໝາຍ.

**ມາດຕາ 66 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ລະເມີດດຳລັດສະບັບນີ້ ຈະຖືກປະຕິບັດມາດຕະການກ່າວເຕືອນສຶກສາອົບຮົມ, ລົງວິໄນ, ປັບໃໝ,ໃຊ້ຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກໍລະນີເບົາ ຫຼື ໜັກ.

**ມາດຕາ 67 ມາດຕະການ ກ່າວເຕືອນ ແລະ ສຶກສາອົບຮົມ**

ບຸກຄົນ ຫຼື ນິຕິບຸກຄົນທີ່ລະເມີດລະບຽບການ ເປັນຕົ້ນ ແມ່ນ ຂໍ້ຫ້າມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ທີ່ມີລັກສະນະເບົາ ແລະ ເປັນການລະເມີດເທື່ອທຳອິດ ຊຶ່ງບໍ່ແມ່ນການກະທຳຜິດທາງອາຍາຈະຖືກກ່າວເຕືອນ ແລະ ສຶກສາອົບຮົມ ພ້ອມທັງເຮັດບົດບັນທຶກໄວ້.

**ມາດຕາ 68 ມາດຕະການທາງດ້ານວິໄນ**

ເຈົ້າໜ້າທີ່ ແລະ ພະນັກງານລັດທີ່ກ່ຽວຂ້ອງ ທີ່ລະເມີດດຳລັດສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກລົງວິໄນຕາມທີ່ກຳນົດໄວ້ໃນກົດໝາຍ ເຊັ່ນ:

1. ກ່າວເຕືອນຄວາມຜິດຕາມລະບຽບການ ພ້ອມທັງບັນທຶກໄວ້ໃນສຳນວນຊີວະປະຫວັດຂອງຜູ້ກ່ຽວ;
2. ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ ແລະ ການຍ້ອງຍໍ;
3. ປົດຕຳແໜ່ງ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນ ທີ່ມີຕຳແໜ່ງຕ່ຳກວ່າເກົ່າ;
4. ໃຫ້ອອກຈາກລັດຖະການ ໂດຍບໍ່ໄດ້ຮັບນະໂຍບາຍ.

ຜູ້ທີ່ຖືກປະຕິບັດວິໄນ ຕ້ອງສົ່ງຊັບສິນທີ່ຕົນໄດ້ມາໂດຍບໍ່ຖືກຕ້ອງນັ້ນຄືນໃຫ້ການຈັດຕັ້ງຢ່າງຄົບຖ້ວນ.

**ມາດຕາ 69 ມາດຕະການປັບໃໝ**

ບຸກຄົນ ຫຼື ນິຕິບຸກຄົນທີ່ລະເມີດດຳລັດສະບັບນີ້ ແລະ ກໍ່ໃຫ້ເກີດມີຄວາມເສຍຫາຍຕໍ່ບຸກຄົນ ຫຼື ການຈັດຕັ້ງອື່ນ ຈະຖືກປັບໃໝ ຕາມລະບຽບການ ແລະ ກົດໝາຍ.

**ມາດຕາ 70 ມາດຕະການທາງແພ່ງ**

ບຸກຄົນ ຫຼື ນິຕິບຸກຄົນທີ່ໄດ້ລະເມີດດຳລັດສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍ ໃຫ້ແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫຼື ບຸກຄົນອື່ນ ຕ້ອງໃຊ້ແທນຄ່າເສຍຫາຍທີ່ຕົນກໍ່ຂຶ້ນ.

**ມາດຕາ 71 ມາດຕະການທາງອາຍາ**

ບຸກຄົນໃດທີ່ໄດ້ລະເມີດດຳລັດສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາຈະຖືກລົງໂທດຕາມກົດໝາຍອາຍາ ຕາມແຕ່ລະກໍລະນີເບົາ ຫຼື ໜັກ.

**ມາດຕາ 72 ມາດຕະການໂທດເພີ່ມ**

ນອກຈາກມາດຕະການຕໍ່ຜູ້ລະເມີດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 66 ຂອງດຳລັດສະບັບນີ້ ຜູ້ລະເມີດຍັງຈະຖືກປະຕິບັດມາດຕະການໂທດເພີ່ມ ເປັນຕົ້ນ ການໂຈະ ຫຼື ຖອນໃບທະບຽນວິສາຫະກິດ.

# ພາກທີ XII

# ບົດບັນຍັດສຸດທ້າຍ

**ມາດຕາ 73 ການຈັດຕັ້ງປະຕິບັດ**

ມອບໃຫ້ ກະຊວງອຸດສາຫະກຳ ແລະ ການຄ້າ ຈັດຕັ້ງປະຕິບັດດຳລັດສະບັບນີ້ໃຫ້ໄດ້ຮັບຜົນດີ.

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຕາມພາລະບົດບາດຂອງຕົນຢ່າງເຂັ້ມງວດ.

**ມາດຕາ 74 ຜົນສັກສິດ**

ດຳລັດສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ 15 ວັນ.

**ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**